# ບົດແນະນຳໃນການປະເມີນຄວາມອ່ອນແອ ແລະ ຄວາມສາມາດຕາມບາດກາວ

## ສຳລັບບຸກຄະລະກອນ ແລະ ອາສາສະໝັກຂອງ ກາແດງລາວ - ກາວິງເດືອນແດງ ທີ່ປະຕິບັດຕົວຈິງຢູ່ພາກສະໜາມ







ASIA PACIFIC ZONE
SOUTH EAST ASIA REGIONAL OFFICE

International Federation
of Red Cross and Red Crescent Societies

## ວາລະກອງປະຊຸມໂລກຂອງສະຫະພັນສາກົນ (2006–2010)

**ໃນຊ່ວງສອງປີຜ່ານມາ, ຈຸດປະສົງລວມຂອງສະຫະພັນ ແມ່ນແນໃສ່ເພື່ອບັນລຸເປົ້າໝາຍ ແລະ ບູລິມະ ສິດດັ່ງຕໍ່ໄປນີ້:**

**ເປົ້າໝາຍ:**

**ເປົ້າໝາຍທີ 1:** ຫຼຸດຜ່ອນຈຳນວນຜູ້ເສຍເສຍວິດ, ບາດເຈັບ ແລະ ຜົນກະທົບຈາກໄພພິບັດ

**ເປົ້າໝາຍທີ 2:** ຫຼຸດຜ່ອນຈຳນວນຜູ້ເສຍເສຍວິດ, ຄວາມເຈັບເປັນ ແລະ ຜົນກະທົບຈາກໄພພິບັດ ແລະ ຄວາມ ສຸກ ເສີນທາງດ້ານສາທາລະນະສຸກ

**ເປົ້າໝານທີ 3:** ເພີ້ມຄວາມສາມາເຂອງຊຸມຊົນ, ອົງກອນພົນລະເຮືອນ,ກາແດງ ແລະກາຊີກວົງເດືອນແດງ ເພື່ອແກ້ໄຂສະພາບສຸກເສີນຂອງຄວາມອ່ອ່ແອ

**ເປົ້າໝາຍທີ 4:** ສົ່ງເສີມຄວາມນັບຖືໃນຄວາມຫຼາກຫຼາຍ ຂອງກຽດສັກສີຂອງມະນຸດ, ແລະ ຫຼຸດຜ່ອນ ຄວາມຮ້າຍແຮງ, ການແບ່ງແຍກ ແລະ ການປະຕິເສດຂອງສັງຄົມ

### ບູລິມະສິດຂອງພວກເຮົາ

ປັບປຸງຄວາມສາມາດລະດັບທ້ອງຖິ່ນ, ຂົງເຂດ ແລະ ສາກົນໃນການຕອບໂຕ້ໄພພິບັດ ແລະບັນຫາສຸກເສີນທາງດ້ານສາທາລະນະສຸກ

ເສີມຂະຫຍາຍກິດຈະກຳຂອງພວກເຮົາໃນຊຸມຊົນທີ່ອ່ອນແອດ້ວຍການສົ່ງເສີມວຽກງານ ສາທາລະນະ ສຸກການເຝົ້າລະວັງພະຍາດ, ການຫຼຸດຜ່ອນ ຄວາມສ່ຽງໄພພິບັດ ເພີ້ມວຽກງານການວາງແຜນ ແລະ ຊຸກຍູ້ສົ່ງເສີມກ່ຽວກັບບັນຫາຄວາມສ່ຽງໄພພິບັດ

ທົບທວນຄືນ ວຽກງານຊຸກຍູ້ສົ່ງເສີມທາງ ດ້ານມະນຸດສະທຳທີ່ເປັນບູລິມະສິດ ໂດຍສະເພາະແມ່ນການຕ້ານຕໍ່ຄວາມຮຸນແຮງ, ຄວາມເຊື່ອມເສຍຊື່ສຽງ ແລະສະຫະພັນກາຊີກວົງເດືອນແດງ, ການຈຳແນກ ແລະການສົ່ງເສີມການຫຼຸດຜ່ອນ ຄວາມສ່ຽງໄພພິບັດ

ສ່ວນໃດໜຶ່ງຂອງປື້ມທີ່ວນີ້ ອາດຖືກນຳມາເປັນເອກະສານອ້າງອີງ , ອັດສຳເນົາ, ແປເປັນພາສາອື່ນໆ ຫຼື ປັບປຸງໃຫ້ເຂົ້າກັບຄວາມຕ້ອງການຂອງທ້ອງຖິ່ນ ໂດຍບໍ່ຈຳເປັນຂໍອະນຸຍາດຈາກສະຫະພັນກາແດງ ແລະ ກາຊີກວົງເດືອນ, ອັນເຮັດໃຫ້ແຫຼ່ງຊັບພະຍາກອນຕ່າງໆໄດ້ຮັບການບັນລະຍາຍຢ່າງຈະແຈ້ງ.

ແຜນທີ່ໆນຳໃຊ້ບໍ່ໄດ້ໝາຍເຖິງ ການສະແດງອອກເຖິງແນວຄິດ ຂອງສະຫະພັນກາແດງ ແລະ ກາຊີກວົງເດືອນແດງ ຫຼື ສະມາຄົມແຫ່ງຊາດ ທາງດ້ານສະຖານະພາບທາງ ດ້ານກົດໝາຍເຂດແດນ ແລະອຳນາດການປົກຄອງຕົນ.

2009

International Federation of Red Cross and Red Crescent Societies
**South East Asia Regional Office**
*Ocean Tower I, 5th Floor, 170/11-12 Sukhumvit Soi 16, Ratchadapisek Road, Klong Toey, Bangkok 10110, Thailand Email: hungha.nguyen@ifrc.org Web site: www.ifrc.*

# ບາດກ້າວການຝຶກປະຕິບັດໂດຍໃຊ້ຄູ່ມືແນະນຳ ການປະເມີນ ຄວາມຕ້ານທານຕ່ຳ ແລະ ຄວາມສາມາດ

## ສຳລັບການຝຶກປະຕິບັດພາກສະໜາມຂອງກາແດງແລະຊີກວົງເດືອນແດງສາກົນ ແລະ ອາສາສະໝັກ

ການປະເມີນ ຄວາມຕ້ານທານຕ່ຳ ແລະ ຄວາມສາມາດແມ່ນເຄື່ອງພື້ນຖານມືທີ່ດີທີ່ສຸດໃນການຊຸມຊົນ

---

ໂຄງສ້າງຂອງຄູ່ມືສາມາດສະແດງໃຫ້ເຫັນຄືດັ່ງລຸ່ມນີ້:

ການຫ້າງຫາກະກຽມ ສຳລັບ ການປະເມີນ ຄວາມອ່ອນແອ ແລະ ຄວາມສາມາດຢູ່ ສະໜາມ

**ມື້ທີ 1**

- ຈັດກອງປະຊຸມ ທຳຄວາມຮູ້ຈັກກັບ ສະມາຊິກ ຊຸມຊົນຄັ້ງທຳອິດ
- ສັງເກດໂດຍກົງ (ທັງສອງວິທີ: ດ້ວຍຕົນເອງ ແລະ ຈາກຜູ້ໃຫ້ຂໍ້ມູນຫລັກ).
- ກຳນົດແຜນທີ່
- ປະຊຸມກັບສະມະຊິກຊຸມຊົນ: ວາດສະພາບຄວາມເປັນມາ ແລະ ປະຫວັດຊຸມຊົນ, ປະຕິທິນລະດູການ, ວິເຄາະເຄືອຂ່າຍສະພາບທາງສັງຄົມ.
- ວິເຄາະຂໍ້ມູນເບື້ອງຕົ້ນ ແລະ ຈັດຂໍ້ມູນໃຫ້ເປັນລະບົບ.

**ມື້ທີ 2**

- ປະຊຸມຮ່ວມກັບຊຸມຊົນ ເພື່ອແລກປ່ຽນຜົນໄດ້ຮັບ ຈາກການວິເຄາະຂອງ **ມື້ທີໜຶ່ງ** ກັບສະມະຊິກຊຸມຊົນ ເພື່ອປະກອບຄຳເຫັນ ແລະ ຂໍ້ມູນເພີ້ມເຕີມ.
- ກວດເບິ່ງແຜນທີ່ ຮ່ວມກັບ ຜູ້ໃຫ້ຂໍ້ມູນຫລັກ.
- ກຸ່ມເປົ້າໝາຍ: ເດັກນ້ອຍ, ແມ່ຍິງ, ຊາວນາ/ຊາວປະມົງ/ ກຳມະກອນ (ການວິ ເຄາະນັ້ນໜັກໃສ່ຄວາມອ່ອນແອ, ຄວາມດ້ອຍໂອກາດ ແລະ ແນວໂນ້ມ ທີ່ ອາດຈະເກີດຂຶ້ນ).
- ການສ້າງລະບົບ ຂໍ້ມູນ ແລະ ກະກຽມມື້ຕໍ່ໄປ "ຂະບວນ ການປ່ຽນແປງ".

**ມື້ທີ 3**

- ປະຊຸມຮ່ວມກັບຊຸມຊົນ ເພື່ອກຳນົດກິດຈະກຳ ເພື່ອປ່ຽນຈາກຄວາມດ້ອຍໂອກາດ ໃຫ້ກາຍເປັນຄວາມສາມາດ ແລະ ປະຕິບັດ ຂະບວນ ການຕ່າງໆ, ໂດຍ ການກຳນົດກິດ ຈະກຳສະເພາະ ເພື່ອການປ້ອງກັນ, ການຜ່ອນຄາຍ ແລະ ການຫ້າງຫາກະກຽມ.
- ການກຳນົດລະບົບຂໍ້ມູນ ແລະ ການສົມທົບ ກ່ອນຈະອອກຈາກຊຸມຊົນ

**ແຜນປະຕິບັດຂອງຊຸມຊົນ ຕໍ່ກັບບັນຫາຕ່າງໆ ທີ່ກຳນົດໄວ້ ຕະຫລອດໄລຍະ ການປະເມີນ ຄວາມອ່ອນແອ ແລະຄວາມສາມາດ**

## 1. ຄວາມເປັນມາ

ການປະເມີນ ຄວາມສາມາດ ແລະ ຄວາມອ່ອນແອ (VCA) ເປັນອົງປະກອບ ໜຶ່ງທີ່ສຳຄັນ ຂອງລະບົບ ການຄຸ້ມຄອງ ໄພພິບັດ ຂອງ ສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນ. ໂດຍການສະ ໜັບສະໜູນ ຈາກຫ້ອງ ການ ພັດທະ ນາສາ ກົນ ຂອງລາຊະອາຈັກ ອັງກິດ (DFID) ແລະ ໜ່ວຍ ງານຊ່ວຍເຫລືອ ດ້ານມະນຸດສະທຳຂອງຄະນະກຳມາທິການ ເອີ ຣົບ (ECHO), ວິທີການປະເມີນ ຄວາມສາມາດ ແລະ ຄວາມອ່ອນແອ ໄດ້ຮັບການ ປັບປຸງ ມາຕັ້ງ ແຕ່ປີ 2006 ແລະ ລ້າສຸດປີ 2007 ແລະ ກາແດງແຫ່ງຊາດ ຫລາຍໆ ປະເທດ ໃນທົ່ວໂລກ ໄດ້ຮັບການ ຝຶກອົບຮົມ ໃນການ ນຳໃຊ້ຄູ່ ມືດັ່ງກ່າວ.

ໃນປະຈຸບັນ, ຢູ່ອາຊີຕາເວັນອອກສ່ຽງໃຕ້, ການນຳໃຊ້ການປະເມີນ ຄວາມສາມາດ ແລະ ຄວາມອ່ອນແອ, ລະບົບຂໍ້ມູນທາງພູມສາດ (GIS) ແລະ ເຄື່ອງມືການປະ ເມີນຄວາມສ່ຽງອື່ນໆ ເພື່ອກຳນົດ ແລະ ຕິດຕາມຄວາມສ່ຽງໄພພິບັດ ແມ່ນມີແຜ່ ຫລາຍ ໃນບັນດາກາ ແດງແຫ່ງ ຊາດປະເທດຕ່າງໆ NSs. ໜຶ່ງໃນຫລາຍໆຕົວຢ່າງ ແມ່ນ ຫລັງຈາກເກີດຄື້ນຍັກຊຸນະມິທີ່ມະຫາສະໝຸດອິນເດຍ, ກາແດງອິນ ໂດເນ ເຊຍ, ຮູ້ກັນໃນນາມ PMI ໄດ້ດຳເນີນກິດຈະກຳຂອງຕົນ ໂດຍນຳໃຊ້ທັງການ ປະເມີນຄວາມສາມາດ ແລະ ຄວາມ ອ່ອນແອ ແລະ ລະບົບຂໍ້ມູນທາງ ພູມສາດ ເພື່ອກຳນົດ ຄວາມສ່ຽງຂອງທ້ອງຖິ່ນ ແລະ ການແກ້ໄຂບັນຫາ ທີ່ກ່ຽວຂ້ອງ ສຳລັບ ການຟື້ນຟູຄືນ ແລະບັນດາໂຄງການຊ່ວຍເຫລືອ ຢູ່ຊຸມຊົນ ໃນເຂດທີ່ໄດ້ຮັບ ຜົນກະ ສະ ແດງ ຜົນຂອງການສຳຫລວດທີ່ຕັ້ງ ຂອງບ່ອນພັກພິງ ຊົ່ວຄາວ ແລະ ພື້ນທີ່ກໍ່ສ້າງທີ່ຢູ່ອາໃສ. ກາແດງແຫ່ງຊາດ ໄດ້ນຳໃຊ້ແຜນທີ່ ເພື່ອກຳນົດຄວາມຕ້ອງການໃນສະເພາະໜ້າ ແລະ ປະ ສານສົມທົບການນຳໃຊ້ຊັບພະຍາກອນ ຂອງຄູ່ຮ່ວມງານກາແດງ ປະເທດ ຕ່າງໆ.

ໃນເດືອນ ພະຈິກ ປີ 2007, ການຝຶກອົບຮົມວຽກງານການປະເມີນຄວາມ ສາມາດ ແລະ ຄວາມອ່ອນແອ ພາກພື້ນອາຊີຕາເວັນອອກ ສ່ຽງໃຕ້ໄດ້ຖືກຈັດຂື້ນໂດຍອົງການກາແດງລາວ ໂດຍມີຜູ້ເຂົ້າຮ່ວມຈຳ ນວນ 25 ຄົນ ຈາກກາແດງ ປະເທດຕ່າງໆພາຍໃນພາກພື້ນ ເພື່ອ ປັບວິທີການ ຂອງຄູ່ມືແນະນຳ ການປະ ເມີນຄວາມສາມາດ ແລະ ຄວາມອ່ອນແອ ຂອງ ສະຫະພັນກາແດງ ແລະ ຊີກວົງເດືອນແດງ ສາກົນ ໃຫ້ແທດເໝາະ ກັບສະພາບປະຈຸບັນ ແລະ ໄດ້ມີການ ສະ ເໜີຈາກຜູ້ເຂົ້າຮ່ວມໃຫ້ພັດທະ ນາບາງຄູ່ມື ເພື່ອໃຫ້ມີຄວາມເປັນ ເອກະ ພາບກັນ ໃນການນຳໃຊ້. ແນວຄວາມຄິດກໍ ເພື່ອປັບ ເຄື່ອງມືການປະເມີນຄວາມສາມາດ ແລະ ຄວາມອ່ອນແອ ຂອງສະຫະພັນກາແດງ ແລະ ຊີກວົງ ເດືອນແດງ ສາກົນ ໃຫ້ເຂົ້າກັບສະ ພາບຕົວຈິງ ໃນອາຊີຕາເວັນອອກສ່ຽງ ໃຕ້ ເພື່ອສະໜັບສະໜູນຂະບວນການປະເມີນຂອງກາແດງແຫ່ງຊາດ ໂດຍຜ່ານ ຈາກການ ປັບປຸງຄູ່ມືແນະນຳປະຈຳພາກພື້ນ. ໂດຍອີງຕາມປະສົບການ ຂອງ ສະຫະພັນກາແດງ ແລະ ຊີກວົງ ເດືອນແດງ ແລະ ເພື່ອຮ່ວມ ງານອື່ນໆ ຈະຊ່ວຍໃຫ້ກາແດງແຫ່ງຊາດ ດຳເນີນການປະເມີນຄວາມສາມາດ ແລະ ຄວາມອ່ອນແອ ແລະ ປັບຂັ້ນຕອນການປະເມີນ ໃຫ້ເຂົ້າກັບປະເທດຂອງຕົນ.

### ບົດຮຽນ ທີ່ຖອດຖອນໄດ້ ຈາກການ ປະຕິບັດຕົວຈິງ

- ການປະເມີນ ຄວາມອ່ອນແອ ແລະ ຄວາມສາມາດ ຄວນໄດ້ຮັບການ ສະໜັບສະໜູນ ຈາກການນຳຂອງ ກາແດງແຫ່ງຊາດ ເພື່ອໃຫ້ໄດ້ຮັບການສະໜັບໜູນ ທາງດ້ານນະໂຍບາຍ ແລະ ຊັບພະຍາກອນ ມະນຸດ;
- ກາແດງແຫ່ງຊາດ ຄວນພັດທະນາ ແລະ ກຳນົດຈຸດປະສົງ ທີ່ລະອຽດ ຊັດເຈນ ຈາກການເລີ້ມຕົ້ນຂອງຂະບວນການປະ ເມີນ;
- ເລືອກບຸກຄົນ ທີ່ເໝາະສົມເຂົ້າມາມີສ່ວນຮ່ວມ ຕົວຢ່າງກໍລະນີ ຈາກ ກາແດງອິນໂດເນເຊຍ ທີ່ທີມງານຫລັກ ຂອງການປະເມີນ ທີ່ສ້າງຂື້ນລວມມີກຸ່ມປະເມີນສະເພາະກິດ ທີ່ມີຄວາມຮູ້ ແລະ ຄວາມສາມາດ ໃນການປະເມີນ ເພື່ອຝຶກອົບຮົມໃຫ້ ທີມງານຫ້າງທາກະກຽມ ແລະ ຕອບໂຕ້ໄພພິບັດ ຢູ່ສາຂາເມືອງ ຈາກນັ້ນ ທີມງານດັ່ງກ່າວ ກໍຈະຝຶກໃຫ້ ທີມງານຂັ້ນບ້ານ ທີ່ເອີ້ນວ່າທີມງານປະຕິບັດ ຂັ້ນຊຸມຊົນ ເພື່ອໃຫ້ຮູ້ວິທີການປະເມີນ ໂດຍນຳໃຊ້ເຄື່ອງມືຕ່າງໆ ເປັນການປະເມີນຄວາມອ່ອນ ແອ ແລະ ຄວາມສາມາດ.
- ຜົນຂອງການ ປະເມີນ ໄດ້ປະສານສົມທົບ ກັບ ພາກສ່ວນອື່ນໆ ທັງ ພາຍໃນ ແລະ ນອກຂະບວນການກາແດງ, ໂດຍສະເພາະ ອຳນາດການປົກຄອງທ້ອງຖິ່ນ ເພື່ອໃຫ້ມີການປະສົມປະສານ ແລະ ການປະຕິ ບັດທີ່ດີ.
- ຜົນຂອງການ ປະເມີນ ຈະໄດ້ປະສານສົມທົບກັບ ບໍ່ສະເພາະການຄຸ້ມ ຄອງໄພພິບັດ ແຕ່ຍັງເສື່ອມສານກັບ ບັນຫາສຸຂະພາບ ແລະ ການຮັກ ສາ ແລະ ການປັດທະນາອົງກອນ (ພັດທະນາ ອສບ).
- ການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ ໂດຍການເພີ້ມຊັບພະຍາກອນ, ການມີສ່ວນຮ່ວມ ແລະ ພັນທະ ຂອງເຂົາເຈົ້າ ເຂົ້າໃນທຸກໆ ຂັ້ນຕອນເພື່ອໃຫ້ເຂົາມີຄວາມເປັນເຈົ້າຕົນເອງ.
- ການປະເມີນ ບໍ່ໄດ້ຮຽກຮ້ອງສະເພາະແຕ່ຊັບພະຍາກອນມະນຸດເທົ່າ ນັ້ນ ແຕ່ມັນຍັງຕ້ອງການງົບປະມານນຳອີກ.
- ການປະເມີນສ່ວນໃຫຍ ໄດ້ຮັບການປະຕິບັດ ບົນພື້ນຖານຂອງໂຄງ ການເທົ່ານັ້ນ. ສຳລັບ ໄລຍະຍາວ, ກາແດງແຫ່ງຊາດ ຄວນມີແຜນຍຸດ ທະສາດເພື່ອດຳເນີນການປະເມີນ ໃນຊຸມຊົນ ທີ່ມີຄວາມສ່ຽງສູງ.
- ການປະເມີນຄວນເນັ້ນໃສ່ທຸກປະເພດຂອງຄວາມສ່ຽງ ແລະ ພັດທະ ນາຂອງໂຄງການ ຫລື ແຜນງານ ເພື່ອໃຫ້ພົວພັນກັບທຸກໆຄວາມສ່ຽງທີ່ໄດ້ກຳນົດໄວ້.
- ການສະໜັບສະໜູນ ຈາກຫລາຍລະດັບ ເພື່ອເສື່ອມສານ ຜົນຂອງການ ປະເມີນ ກັບ ແຜນພັດທະນາເສດຖະກິດ -ສັງຄົມ ຂອງຊຸມຊົນ.
- ການສ້າງຄວາມສາມາດ ແມ່ນມີຄວາມຕ້ອງການ ໃນທຸກໆຂະບວນ ການ ເພື່ອໃຫ້ຊຸມຊົນມີຄວາມສາມາດພຽງພໍ ໃນການປະຕິບັດກິດຈະກຳຫລຸດຜ່ອນຄວາມສ່ຽງ ແລະ ຄວາມອ່ອນແອໃນຕໍ່ໜ້າ.
- ການປະສານງານພາຍໃນໜ່ວຍງານຕ່າງໆ ຂອງກາແດງ ເປັນຕົ້ນ ໜ່ວຍງານຄຸ້ມຄອງໄພພິບັດ, ສຸຂະພາບ ແລະ ພັດທະນາອົງກອນ ຕ້ອງໄດ້ຮັບການພິຈາລະນາ ເພື່ອໃຫ້ມີການເສື່ອມສານທີ່ດີ ຂອງການ ປະເມີນເຂົ້າໃນແຜນງານຕ່າງໆຂອງກາແດງແຫ່ງຊາດ.

ໜຶ່ງໃນບັນດາສິ່ງທ້າທາຍທີ່ພົບພໍ້ ໃນຄະນະກຳນົດ ແລະ ປະຕິບັດແຜນງານກໍຄືຜົນ ຂອງການປະເມີນບໍ່ໄດ້ມີການປະສານກົມກຽວກັນ ເທົ່າທີ່ຄວນ ແລະ ບໍ່ເປັນແຜນພັດທະນາ ທີ່ມີຄວາມຍືນຍົງ ສຳລັບ ຊຸມຊົນ. ອີກຢ່າງໜຶ່ງ, ກໍຂາດການມີສ່ວນຮ່ວມຂອງຊຸມຊົນ ບໍ່ວ່າ ທາງດ້ານຄວາມຮູ້ກໍຄືອຸປະກອນໃນການປະຕິບັດ. ບາງບົດຮຽນ ທີ່ຖອດຖອນ ໄດ້ຈາກການປະ ເມີນຄວາມສາມາດ ແລະ ຄວາມ ອ່ອນ ແອ ໃນຫລາຍປີທີ່ຜ່ານມາໄດ້ກຳນົດ ໄວ້ວ່າ ຄວນມີການ ພິຈາລະນາກ່ອນ, ໄລຍະ ແລະ ຫລັງການປະຕິບັດການ ປະເມີນ ໃນພາກພື້ນຂອງຕົນ.

## 2. ການເຂົ້າເຖິງຂອງພວກເຮົາ

**ວິທີການຂອງກາແດງປະເທດຕ່າງໆ ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ສຳລັບການຫລຸດຜ່ອນຄວາມສ່ຽງໄພພິບັດ "ສ້າງຊຸມຊົນ ໃຫ້ມີຄວາມປອດໄພ ແລະ ເຂັ້ມແຂງ ເພື່ອຮັບ ມືກັບໄພພິບັດ"**

1. ໂດຍການເພີ້ມຂີດຄວາມສາມາດ ຂອງກາແດງແຫ່ງຊາດ ເພື່ອໃຫ້ການບໍລິການທີ່ດີ ແກ່ຊຸມຊົນທີ່ດ້ອຍໂອກາດກວ່າ ຫມູ່.
2. ໂດຍການເພີ້ມລະດັບຈິດສຳນຶກ , ຄວາມຮູ້ພາຍໃນຊຸມຊົນ ກ່ຽວກັບການປະຕິບັດກ່ອນ, ຕະຫລອດໄລຍະຫລັງເກີດ ໄພພິ ບັດ.
3. ໂດຍການກຳນົດ ການເຂົ້າໃຈຜິດຂອງຊຸມຊົນ ກ່ຽວກັບ ໄພພິບັດ ແລະ ໂດຍສະໜອງຄວາມຮູ້ທີ່ຖືກຕ້ອງ ເພື່ອ ໃຫ້ຊຸມຊົນ ສາມາດ ຮັບມືກັບໄພພິບັດ.
4. ໂດຍການສ້າງ ຄວາມສາມາດຂອງຊຸມຊົນໃຫ້ເຂັ້ມແຂງ ເພື່ອກຳນົດ ແລະ ຕິດຕາມໄພອັນຕະລາຍຮ້າຍແຮງ ແລະ ຄວາມສ່ຽງຕ່າງໆ ແລະ ສັງລວມຊັບພະຍາກອນທີ່ມີຢູ່ ໃນ ຊຸມຊົນ.
5. ໂດຍການກະຕຸ້ນຊຸມຊົນໃຫ້ເຂົ້າຮ່ວມ ໃນວຽກງານຜ່ອນ ຄາຍຮັກສາຊີວິດໃຫ້ປອດໄພ
6. ໂດຍສະໜັບສະໜູນເຄືອຂ່າຍ ແລະ ການຮ່ວມມືແບບ ຍືນຍົງເພື່ອໃຫ້ມີການສະໜັບສະໜູນ ສຳລັບການທ້າງທາກະກຽມ ແລະ ການຜ່ອນຄາຍຕໍ່ໄພິບັດ.

### ການປະເມີນຄວາມສາມາດ ແລະຄວາມອ່ອນແອ ແມ່ນຫຍັງ ?

**ການປະເມີນຄວາມສາມາດ ແລະ ຄວາມອ່ອນແອ** ແມ່ນຂະບວນການ ເກັບກຳ, ວິເຄາະ ແລະ ສ້າງລະບົບ ຂໍ້ມູນ ໃນທິດທາງ ທີ່ມີໂຄງສ້າງ ແລະ ຄວາມໝາຍຊຶ່ງອາດຈະນຳໄປໃຊ້ ເພື່ອບົ່ງມະຕິ ຄວາມສ່ຽງ ແລະ ຄວາມ ສາມາດຂອງຊຸມຊົນທີ່ມີຢູ່ ແລະ ນຳພາໄປສູ່ກິດຈະກຳ, ຊຶ່ງຈະ ຊ່ວຍຫລຸດ ຜ່ອນ ຄວາມອ່ອນແອຂອງປະ ຊາຊົນ ແລະ ເພີ້ມຂີດຄວາມສາມາດ ຂອງ ເຂົາເຈົ້າ. ການວິນິດໃສ **ການປະເມີນ ຄວາມສາມາດ ແລະ ຄວາມອ່ອນແອ ຄວນມີການ**ເສື່ອມເຂົ້າກັບແຜນງານ ແລະ ກິດຈະກຳອື່ນໆ ທີ່ຈະເຮັດ ໃຫ້ມີຄວາມເຂັ້ມແຂງໄປພ້ອມໆກັນ.

### ອັນໃດທີ່ບໍ່ແມ່ນການປະເມີນຄວາມອ່ອນແອແລະຄວາມສາມາດ ?

**ການປະເມີນ ຄວາມອ່ອນແອ ແລະ ຄວາມສາມາດ** ມີຂອບເຂດຈຳກັດ, ມັນອາດຈະກວມເອົາຂັ້ນຕອນທັງໝົດ ໃນການດຳເນີນທີ່ຜິດພາດ ຖ້າຫາກມີຄວາມເຂົ້າໃຈ ແລະ ນຳໃຊ້ບໍ່ລະອຽດຊັດເຈນ. ບາງຄັ້ງ ອົງປະກອບຂອງຄວາມສາມາດ ຂອງຂັ້ນຕອນການປະເມີນທັງໝົດ ໄດ້ຖືກນຳໃຊ້ ບໍ່ຖືກຕ້ອງ ຫລື ປະດິດສ້າງ ໂດຍ ພະນັກງານກາແດງ ແລະ ອາສາສະມັກ ແລະ ພະຍາຍາມເສື່ອມສານວຽກນີ້ເຂົ້າກັບຂັ້ນຕອນການສ້າງຂີດຄວາມສາມາດ ດ້ານສະຖາບັນ ແລະ ດ້ານການຈັດຕັ້ງ. ການປະເມີນ ບໍ່ຄວນຄຳນຶງແຕ່ ເພື່ອດຶງທຶນຈາກພາຍ ນອກ ເພາະວ່າບູລິມະສິດທຶນຈາກພາຍນອກບໍ່ມີຈັກເທື່ອ ທີ່ຈະເຮັດໃຫ້ຄວາມອ່ອນແອ, ຄວາມຕ້ອງການ ໃນປະຈຸບັນ ທີ່ຂະບວນ ການປະເມີນຄວາມອ່ອນແອ ແລະ ຄວາມສາມາດ ໄດ້ກວມ ເອົາ.

ການຈັດລຽງບັນຫາໂດຍຊຸມຊົນ - ອົງການກາແດງລາວ



## 3. ຂັ້ນຕອນການ ປະເມີນຄວາມອ່ອນແອ ແລະ ຄວາມສາມາດ ແລະ ຄູ່ມືແນະນຳ :

**ຂັ້ນຕອນສຳລັບການປະເມີນຄວາມອ່ອນແອ ແລະຄວາມສາມາດ**

**12 ບາດກ້າວ ສຳລັບການປະເມີນ ທີ່ມີປະສິດທິຜົນ (ເລີ້ມຈາກການສອບຖາມ ເຖິງ ການກະທຳ)**

*ລະດັບທີ 1: ການສະໜັບສະໜູນ ກາແດງແຫ່ງຊາດ*

1. ຈົ່ງໃຫ້ເຂົ້າໃຈວ່າ ເປັນຫຍັງຈຶ່ງປະເມີນ
2. ເຜີຍແຜ່ ໃຫ້ການນຳ ກາແດງແຫ່ງຊາດ, ສາຂາກາແດງ ແລະ ເພື່ອນຮ່ວມງານເຂົ້າໃຈ
3. ກຳນົດ ໂຄງສ້າງການບໍລິຫານ ເພື່ອດຳເນີນການປະເມີນ
4. ການກຳນົດຈຸດປະສົງຕ່າງໆຂອງການປະເມີນຄວາມອ່ອນແອ ແລະ ຄວາມສາມາດ (ເຊັ່ນ: ຢູ່ບ່ອນໃດ)

*ລະດັບທີ 2: ການປະເມີນ ເກັບກຳຂໍ້ມູນ*

5. ວາງແຜນການປະເມີນ (ໃຜ, ຈະເຮັດຫຍັງ ແລະ ເຮັດເວລາໃດ)
6. ໄລຍະກະກຽມ
7. ນຳໃຊ້ເຄື່ອງມືການສອບຖາມ ພາຍໃນຊຸມຊົນ
8. ກຳນົດລະບົບ, ວິເຄາະ ແລະ ແປຄວາມຫມາຍຂໍ້ມູນ
9. ນຳຂໍ້ມູນກັບໄປສູ່ຊຸມຊົນ, ຕັດສິນບຸລິມະສິດ , ກິດຈະກຳ ເພື່ອການປ່ຽນແປງ

*ລະດັບທີ 3: ການວາງແຜນ ສູ່ການກະທຳ*

10. ຫັນເອົາຄວາມດ້ອຍໂອກາດມາເປັນຄວາມສາມາດ ໂດຍຜ່ານ ການເຮັດຕົວຈິງ
11. ຂຽນຂໍ້ສະເໜີແນະ ແລະ ບົດລາຍງານ ສຳລັບ ອຳນາດການປົກຄອງທ້ອງຖິ່ນ, ຜູ້ໃຫ້ທຶນ ແລະ ຄູ່ຮ່ວມງານອື່ນໆ
12. ການປະຕິບັດ ແຜນງານ: ໂຄງການຫລຸດຜ່ອນຄວາມສ່ຽງ ຮ່ວມກັບຊຸມຊົນ

## ລະດັບທີ 1: ການສະໜັບສະໜູນກາແດງແຫ່ງຊາດ

**<u>ບາດກ້າວທີ 1:</u> ຄຳຖາມທຳອິດແລະສຳຄັນກວ່າໝູ່ທີ່ຕັ້ງຂື້ນມາກໍຄື: ເປັນຫຍັງຈຶ່ງມີການປະເມີນ VCA ການປະເມີນນັ້ນຈະຊ່ວຍໃຫ້ກາແດງ ແຫ່ງຊາດ ເພື່ອຫຼຸດຜ່ອນຄວາມຕ້ານທານຕ່ຳໃນຊຸມຊົນໄດ້ບໍ?**

ກ່ອນເຮັດການປະເມີນຄວາມອ່ອນແອ ແລະ ຄວາມສາມາດ ເຮັດຄື ດັ່ງລຸ່ມນີ້ :

- ກາແດງແຫ່ງຊາດຂອງພວກທ່ານ ໄດ້ເຂົ້າໄປເຮັດວຽກກັບຊຸມຊົນແບບມີສ່ວນຮ່ວມເປັນເວລາດົນນານບໍ?
- ວິທີການປະເມີນຄວາມອ່ອນແອ ແລະຄວາມສາມາດ ອັນເໝາະສົມພວກເຈົ້າຄິດ ວ່າຄວນໃຊ້ວິທີການໃດແດ່?
- ທ່ານມີບຸກຂະລາກອນ & ປະສົບການໃນການເຮັດ VCA ລຸ່ມນີ້ຫຍັງແດ່?
- ກາແດງແຫ່ງຊາດຂອງພວກທ່ານຈະມີຄວາມຈຳເປັນຝຶກອົບຮົມໃຫ້ພະນັກງານ ແລະອາສາສະໝັກທີ່ເຮັດວຽກໃນຊຸມຊົນ?.
- ມີອົງການຈັດຕັ້ງອື່ນບໍ່ທີ່ເຮັດການຫ້າງກາກະກຽມຕອບໂຕ້ໄພພິບັດ, ຖ້າຊຸມຊົນຕ້ອງການ?

ຈື່ງຈຳໄວ້ວ່າ: ການຕັດສິນໃຈໃນການຈັດຕັ້ງປະຕິບັດ VCA ບໍ່ສາມາດ ເຮັດໄດ້ຢ່າງ ງ່າຍດາຍ.ມັນຕ້ອງໄຊ້ເວລາ, ຄວາມພະຍາຍາມ ແລະ ຄວາມຮັບຜິດຊອບສູງ ຂອງ ກາແດງແຫ່ງຊາດ, ກາແດງສາຂາແຂວງ ລວມທັງຊຸມຊົນ.

**<u>ບາດກ້າວທີ 2:</u> ເຜີຍແຜ່**ໃຫ້ການນຳ ຂອງກາແດງສູນກາງ, ສາຂາກາແດງແຂວງ ແລະ ຄູ່ຮ່ວມງານຕ່າງໆ ເຂົ້າໃຈການປະເມີນຄວາມອ່ອນ ແອ ແລະ ຄວາມສາມາດ ເພື່ອໃຫ້ໄດ້ຮັບການສະໜັບສະໜູນຈາກພວກເຂົາເຈົ້າໃນທຸກໆ ຂັ້ນຕອນຂອງການປະເມີນ.

**<u>ບາດກ້າວທີ 3:</u> ກຳນົດໂຄງສ້າງການບໍລິຫານເພື່ອດຳເນີນການ ປະເມີນ.**

ໂຄງສ້າງການບໍລິຫານໜຶ່ງໃນລະດັບຕ່າງໆ ຕ້ອງໄດ້ຮັບການສ້າງຂື້ນມາເພື່ອຮັບປະກັນວ່າການປະເມີນດຳເນີນໄປໄດ້ຢ່າງມີປະສິດທິພາບ (ເບິ່ງຮູບສະແດງລຸ່ມນີ້).

### ສິ່ງທີ່ມີປະໂຫຍດຄືການປະກອບໂຄງສ້າງການບໍລິຫານ

ໃນເມື່ອປະກອບໂຄງສ້າງການບໍລິຫານ, ຈົ່ງແນ່ໃຈວ່າໜ້າວຽກຕ່າງໆ ລຸ່ມນີ້ ໄດ້ຮັບ ການປະຕິບັດ:

- ກຳນົດໜ້າວຽກລະອຽດ ຊຶ່ງລວມມີ ໜ້າທີ່ ແລະຄວາມຮັບຜິດຊອບ (ການແບ່ງໜ້າວຽກ) ຂອງທຸກຄົນທີ່ມີສ່ວນກ່ຽວຂ້ອງຊຶ່ງພວກເຂົາເຈົ້າເປັນສ່ວນໜຶ່ງ ຂອງຄະນະກຳມະການ ຫລື ບໍ່ແມ່ນຄະນະກຳມະການ (ຍົກຕົວ ຢ່າງ ປະທານ, ເລຂາທິ ການ ແລະ ອື່ນໆ).
- ມີພັນທະຢ່າງຈະແຈ້ງຈາກຜູ້ທີ່ມີສ່ວນກ່ຽວຂ້ອງເຫລົ່ານັ້ນ
- ກຳນົດຄວາມຕ້ອງການສຳລັບໂຄງສ້າງ ເພື່ອປະຕິບັດ ໜ້າທີ່ (ເວລາ, ຊັບພະຍາກອນ, ສາຍໂຍການ ຕິດຕໍ່ສື່ ສານ ແລະ ອື່ນໆ).
- ກຳນົດບັນຫາເດັ່ນທີ່ອາດຈະເກີດຂື້ນ ແລະ ວິທີແກ້ໄຂ (ຍົກຕົວ ຢ່າງ ສາຍພົວພັນ ລະຫວ່າງ ລະດັບ ຕ່າງໆ).
- ກຳນົດເວລາ ແລະ ງົບປະມານ. ຕັດສິນໃຈ ເວລາໃດໃນການແກ້ໄຂໂຄງສ້າງ.

**<u>ບາດກ້າວທີ 4:</u> ກຳນົດຈຸດປະສົງຂອງການປະເມີນ ຈົ່ງຈຳວ່າຕໍ່ໄປນີ້ຄືການກຳນົດ ຈຸດປະສົງ:**

- ຈຸດປະສົງລວມ ຄວນຕອບຄຳຖາມ ຕໍ່ໄປນີ້: ເປັນຫຍັງ ທ່ານ ຈຶ່ງຕ້ອງການເຮັດການປະເມີນ ?




- ຈຸດປະສົງສະເພາະຕ້ອງສະເພາະເຈາະຈົງ, ວັດແທກໄດ້, ບັນລຸຜົນ, ເປັນຈິງ ແລະ ຖືກຕາມກຳນົດ ເວລາ (SMART), ພ້ອມທັງຈະແຈ້ງ ແລະ ເປັນທີ່ເຂົ້າໃຈ ຂອງ ໝົດທຸກຄົນ.
- ນຳໃຊ້ ຂະບວນການແບບມີສ່ວນຮ່ວມ ເພື່ອພັດທະ ນາຈຸດປະສົງ.
- ມີການພູກມັດລະຫວ່າງຜູ້ທີ່ກ່ຽວຂ້ອງ ເພື່ອຫລີກເວັ້ນ ບັນຫາໃນອະນາຄົດ
- ກຳນົດຂະໜາດ ແລະ ຮູບແບບ ຂອງການປະເມີນ ໂດຍ ຕອບຄຳຖາມດັ່ງຕໍ່ໄປນີ້: ຈະດຳເນີນການປະ ເມີນ ຢູ່ໃສ ? ມີຈັກຊຸມຊົນ ແລະ ສາຂາກາແດງໃດ ຈະເຂົ້າມາ ມີສ່ວນ ກ່ຽວຂ້ອງ? ມີຊັບພະຍາກອນມະນຸດ ແລະການເງິນ ຄືແນວໃດ ?
- ຈົດຈຳທ່າທີທາງດ້ານວັດທະນທຳ ແລະ ພຶດຕິກຳ ຂອງ ຊຸມຊົນບ່ອນທີ່ຈະຈັດຕັ້ງປະຕິບັດການປະເມີນ.

## ລະດັບທີ 2: ຈາກການປະເມີນ ເຖິງການວາງແຜນ

**<u>ບາດກ້າວທີ 5:</u> ການວາງແຜນການປະເມີນ**

ໃນເມື່ອກາແດງແຫ່ງຊາດ ຂອງທ່ານ ໄດ້ຕັດສິນໃຈ ຈະທີ່ດຳ ເນີນການປະເມີນ, ທ່ານມີໂຄງສ້າງ ການບໍລິຫານ, ຈຸດປະສົງຕ່າງໆໄດ້ຮັບການກຳນົດຂື້ນມາ ແລະ ທຸກຄົນກະຕືລືລົ້ນ ພ້ອມທີ່ຈະເລີ້ມການປະເມີນ, ບາດກ້າວຕໍ່ໄປຈະແມ່ນຫຍັງ ?

**<u>ບາດກ້າວທີ 6:</u> ໄລຍະກະກຽມ**

ໄລຍະເບື້ອງຕົ້ນ ຂອງການກະກຽມນີ້ ປະກອບມີ:

- ການກຳນົດ ສາຂາກາແດງ ແລະ ຊຸມຊົນທີ່ຈະເຂົ້າຮ່ວມ.
- ການຄັດເລືອກ ແລະ ຝຶກອົບຮົມ ພະນັກງານ ແລະ ອາສາສະມັກ (ທີມງານປະຕິບັດ).
- ການກຳນົດ ແລະ ຄວາມຕ້ອງການຊັບພະຍາກອນ ທີ່ຈຳເປັນ.
- ການກຳນົດ ເຄື່ອງມື ການສອບຖາມ ເພື່ອນຳໃຊ້ເຂົ້າ ໃນການປະເມີນ.

| ໄລຍະ | [redacted] | ຜູ້ທີ່ຮັບປະກັນການປະເມີນແມ່ນໃຜ ? | [redacted] | ມື້ງກອນ | [redacted] | ມື້ນາ | [redacted] |
|---|---|---|---|---|---|---|---|
| ກະກຽມ | [redacted] | | [redacted] | | [redacted] | | [redacted] |
| ປະຕິບັດ | [redacted] | | [redacted] | | [redacted] | | [redacted] |
| ວິເຄາະ | [redacted] | | [redacted] | | [redacted] | | [redacted] |
| ວາງແຜນ ໂຄງການ ແລະ ກິດຈະກຳ | [redacted] 1 | | [redacted] | | [redacted] | | [redacted] |

### ການກຳນົດຊຸມຊົນ

- ຊຸມຊົນໃດ ທີ່ມີຄວາມສ່ຽງ ຫລາຍກວ່າໝູ່ ?
- ຈະເຂົ້າເຖິງຊຸມຊົນ ໄດ້ແນວໃດ ?
- ຊຸມຊົນມີຫລາຍປານໃດ? ຂະໜາດຂອງການ ປະເມີນ ຄວນມີຂະໜາດເທົ່າໃດ ?
- ສາຂາກາແດງ ມີປະສົບການ ເຮັດວຽກຢູ່ຊຸມຊົນບໍ? ການປະເມີນ ມີການເຊື່ອມສານກັບ ກິດຈະກຳ ອື່ນຂອງກາແດງບໍ ?
- ຊຸມຊົນມີຄວາມສົນໃຈບໍ ? ມີການຈັດຕັ້ງພຽງພໍບໍ ?
- ຄວາມອາດສາມາດ ຂອງສາຂາກາແດງ ມີຫຍັງແດ່? ສາຂາກາແດງມີ ອາສາສະມັກ ພຽງພໍແລ້ວບໍ ?
- ມີອົງການຈັດຕັ້ງ ທີ່ບໍ່ຂຶ້ນກັບລັດຖະບານອື່ນໆ ເຮັດວຽກໃກ້ຊຸມຊົນນັ້ນບໍ ? ທ່ານສາມາດເຮັດວຽກຮ່ວມ ກັບເຂົາເຈົ້າ ໄດ້ບໍ ?



ຄົນໃນຊຸມຊົນຄວນຈະມີສ່ວນຮ່ວມໃນຂະບວນການທັງໝົດ-ກາແດງຫລວງນ້ຳທາ

***ຈົ່ງຈື່ໄວ້ວ່າ ສະມາຊິກຊຸມຊົນ ເປັນຜູ້ຕັດສິນໃຈວ່າຈະເຂົ້າມາມີ ສ່ວນຮ່ວມ ຫລື ບໍ່, ຖ້າຫາກພວກເຂົາເຈົ້າ ຕັດສິນໃຈ ເຂົ້າຮ່ວມ, ພວກ ເຂົາເຈົ້າກໍ່ຈະສາມາດຊ່ວຍທີມງານ ໃນການເກັບກຳຂໍ້ມູນ. ພວກເຂົາຮູ້ດີວ່າ ທີມງານຈະພົບໃຜ,ຮູ້ເວລາທີ່ຈະພົບຜູ້ຄົນເຂົາເຈົ້າຈະພົບ ຢູ່ ບ່ອນໃດ.***

### ການຄັດເລືອກ ສະມາຊິກ ທີມງານ

- ກຳນົດທັກສະ ຕົ້ນຕໍ ທີ່ຕ້ອງການ ສຳລັບ ທຸກໆ ຂັ້ນຕອນ, ອາດຈະເປັນທີມງານ ທີ່ມີວິຊາການຫລາຍຢ່າງ ພ້ອມດ້ວຍຄົນທີ່ມີປະສົບການ ຈາກທຸກໆຂົງເຂດ (ສຸຂະພາບ, ຄຸ້ມຄອງໄພພິບັດ, ພັດທະນາອົງກອນ)
- ບົດບາດຍິງຊາຍ: ຮັບປະກັນ ໃຫ້ມີບົດບາດຍິງ-ຊາຍ ໃຫ້ຫລາຍເທົ່າທີ່ຈະຫລາຍໄດ້
- ພັນທະ: ສະມາຊິກທຸກຄົນ ຄວນມີເວລາ ແລະ ພັນທະ ໃນທຸກໆຂັ້ນຕອນ

### ການຝຶກອົບຮົມ

ເປັນສິ່ງທີ່ຈຳເປັນ ທີ່ສະມາຊິກ ທີມງານທຸກຄົນ ຕ້ອງໄດ້ປະກອບໄປດ້ວຍຄວາມຮູ້ທຸກຢ່າງ ໃນການປະເມີນ. ຜ່ານປະສົບການ ຊີ້ໃຫ້ເຫັນວ່າ ຢ່າງໜ້ອຍ ຕ້ອງການ ສອງ ຫາສາມວັນ ເພື່ອຝຶກທີມງານ.

### ການກຳນົດ ຊັບພະຍາກອນ ທີ່ຈຳເປັນ

ລະບົບການບໍລິຫານ ທີ່ເຫມາະສົມ ແລະ ມີຊັບພະຍາກອນດ້ານ ການເງິນຊັບພະຍາກອນ ທີ່ຕ້ອງການສ່ວນໃຫຍ່ ແມ່ນ ເວລາ, ພະລັງງານ ແລະ ພັນທະ ຂອງ ພະນັກງານ ແລະ ອາສາສະມັກ ການກຳນົດເຄື່ອງມືເພື່ອນຳໃຊ້ ໃນການປະເມີນຄວາມສາມາດ ແລະ ຄວາມອ່ອນແອ VCA

ການຄັດເລືອກເຄື່ອງມື ໂດຍອີງຕາມ ມາດຖານດັ່ງຕໍ່ໄປນີ້:

- ຂໍ້ມູນທີ່ຕ້ອງການ
- ຈຳນວນ ສະມາຊິກ ທີມງານ
- ໄລຍະເວລາ
- ວັດທະນະທຳຊຸມຊົນ
- ພຶດຕິກຳ, ລະບຽບ ແລະ ປະສົບການ ຂອງສະມາຊິກທີມງານ

**ຫລັງຈາກທຸກສິ່ງ ທຸກຢ່າງ ຂ້າງເທິງນັ້ນ ກຽມພ້ອມແລ້ວ, ທ່ານ ກໍເລີ່ມ ການປະເມີນ ຄວາມອ່ອນແອ ແລະ ຄວາມສາມາດ ໃນ ຊຸມຊົນຕາມ ບາດກ້າວທີ 7, 8 ແລະ 9 ຢູ່ ລະດັບທີ 2 ແລະ ບາດກ້າວທີ 10, 11 ແລະ 12 ຢູ່ ລະດັບທີ 3 ຕໍ່ໄປ.**

ການເຂົ້າຮ່ວມຂອງແມ່ໃນການປະເມີນຄວາມອ່ອນແອ ແລະຄວາມສາມາດເປັນສິ່ງທີ່ຈຳເປັນ, ອີງການກາແດງລາວ



**ນີ້ຄື ວິທີດຳເນີນການປະເມີນ ແບບມື້ຕໍ່ມື້ ຢູ່ພາກສະໜາມ ພ້ອມກັບ ຜົນໄດ້ຮັບທີ່ຄາດຫວັງໄວ້.**

## ມື້ທີ 1

1. ກອງປະຊຸມເຜີຍແຜ່ຄັ້ງທຳອິດຮ່ວມກັບ ສະມາຊິກຊຸມຊົນ
2. ການສັງເກດໂດຍກົງ (ທັງດ້ວຍຕົນເອງ & ຜູ້ທີ່ໃຫ້ຂໍ້ມູນ ຫລັກ).
3. ສ້າງແຜນທີ່
4. ປະຊຸມຮ່ວມກັບ ສະມາຊິກຊຸມຊົນ: ຕາຕະລາງ ປະຫວັດ ຄວາມເປັນມາ, ຕາຕະລາງ ລະດູການ, ການວິເຄາະ ເຄືອຂ່າຍ ທາງສັງຄົມ.
5. ການວິເຄາະ ຂໍ້ມູນ ເບື້ອງຕົ້ນ ແລະ ການກຳນົດລະບົບ

### 1. ກອງປະຊຸມເຜີຍແຜ່ ຄັ້ງທຳອິດ ຮ່ວມກັບ ສະມາຊິກຊຸມຊົນ

ໃຫ້ມີຄວາມເປັນເອກະພາບກັນ ພາຍໃນ ສະມາຊິກ ຂອງທີມງານ ກ່ຽວກັບ ຈຸດປະສົງ ແລະ ຜົນໄດ້ຮັບຂອງກອງປະຊຸມ. **ບໍ່ຄວນຍົກຄວາມ ຄາດຫວັງຂຶ້ນມາ** ແລະ ໝັ້ນໃຈວ່າ ຊຸມຊົນເຂົ້າໃຈ ວ່າ ວິທີການຂອງການປະເມີນຄວາມອ່ອນແອ ແລະ ຄວາມສາມາດ ແມ່ນຂະບວນການປະເມີນ ແບບມີສ່ວນຮ່ວມ ໂດຍຜ່ານສິ່ງດັ່ງກ່າວນັ້ນ ພວກເຂົາເຈົ້າ ຈະພົບເຫັນຫລາຍໆທາງອອກ ເພື່ອຊ່ວຍເຫລືອດ້ວຍຕົວເຂົາເຈົ້າເອງ.

ຈຸດປະສົງ ຂອງ ກອງປະຊຸມ ດັ່ງກ່າວນີ້ ກໍເພື່ອຊຸກຍູ້ໃຫ້ ສະມາຊິກຊຸມຊົນ ເປັນເຈົ້າການເຂົ້າຮ່ວມໃນຂະບວນການປະເມີນ. ຮັບປະກັນໃຫ້ສະມາຊິກ ຊຸມຊົນ ເຂົ້າໃຈ ຂະບວນການ ແລະ ຄວາມຕ້ອງການ ເພື່ອຮັບປະກັນຜົນໄດ້ຮັບ ສຳລັບຊຸມຊົນຂອງພວກເຂົາເຈົ້າເອງ.

**ຕົກລົງແຜນວຽກຮ່ວມກັບຊຸມຊົນ,** ເພື່ອຮັບປະກັນວ່າ ພວກເຂົາເຈົ້າຮັບຮູ້ ຢ່າງເຕັມສ່ວນ ວ່າ ທີມງານຈະເຮັດຫຍັງ ແລະ ເຮັດແນວໃດ. ຮັບປະກັນ ການມີສ່ວນຮ່ວມ ຂອງ ສະມາຊິກຊຸມຊົນ ຕາມຄວາມສາມາດ ຂອງ ເຂົາເຈົ້າ.

ສຸດທ້າຍ, ສະເໜີໃຫ້ສະມາຊິກ ຊຸມຊົນ ແລກປ່ຽນ ຄວາມຄິດເຫັນ ຮ່ວມກັບທີມງານ ປະເມີນຄວາມອ່ອນແອ ແລະ ຄວາມສາມາດ ກ່ຽວກັບ ໄພອັນຕະລາຍຕົ້ນຕໍ/ອຸປະສັກ/ຄວາມຕ້ອງການ/ບັນຫາຕ່າງໆ ທີ່ພວກເຂົາເຈົ້າປະເຊີນ ຢູ່ຕາມປົກກະຕິໃນຊຸມຊົນ.

### 2. ການສັງເກດໂດຍກົງ:

***ທ່ານຈຳໄດ້ວ່າເປັນໄດ້ ຮັບຂອງກິດຈະກຳທັງໝົດ ຈະໄດ້ຮັບການ ກວດກາ ຈາກຊຸມຊົນ, ການບັນທຶກຢ່າງລະອຽດລວມທັງຂໍ້ມູນ ແລະ ການກຳນົດລວມ ປັບລະບົບການຮ່ວມເຮັດ ໃຫ້ການກວດສອບຂໍ້ມູນ ຮ່ວມກັບ ຊຸມຊົນ ໄດ້ຢ່າງເໝາະສົມ.***

ທີມງານ ຄວນສັງເກດ ສິ່ງຂອງ, ຄົນ, ເຫດການ, ສາຍພົວພັນ, ການ ປະກອບສ່ວນ ແລະ ບັນທຶກການສັງເກດຢ່າງເປັນລະບົບ. ອັນນີ້ຈະ ເຮັດໃຫ້ພວກເຮົາ ເຫັນພາບຂອງໄພພິບັດ ແລະ ສະພາບຂອງໄພອັນຕະ ລາຍໄດ້ດີຂຶ້ນ, ໂດຍສະເພາະສິ່ງທີ່ຫຍຸ້ງຍາກໃນການ ໃຊ້ອະລິຍະບົດ. ນີ້ເປັນແນວທາງ ໃນການກວດກາລະອຽດຂໍ້ມູນ.

**ມີສອງວິທີ:**

- ການສັງເກດໂດຍກົງ ແລະ ບໍ່ເປັນທາງການ
- ການສັງເກດຜູ້ເຂົ້າຮ່ວມ

ຂໍ້ແນະນຳ ໃນການສັງເກດ ໂດຍກົງ ຕໍ່ໄປນີ້ ສາມາດຊ່ວຍໃຫ້ທ່ານເຮັດວຽກ ຢູ່ພາກສະໜາມໄດ້:

**ກ່ຽວກັບ ພື້ນຖານໂຄງລ່າງ:**

1. ບ່ອນລະບາຍນ້ຳ - ຄວາມມີພ້ອມ, ປະເພດ, ໜ້າທີ່
2. ອາຄານ - ການອອກແບບເຄຫາ, ຄວາມໄກ້, ປະເພດ ອຸປະກອນ, ທີ່ພັກ ອາໃສ
3. ລະບົບລະບາຍນ້ຳເສຍ - ຄວາມມີພ້ອມ ໃນການລະບາຍ ມົນ ລະພິດ, ທໍ່ລະບາຍ ສິ່ງໂສໂຄກ.

4. ສິ່ງອຳນວຍຄວາມສະດວກ - ໄຟຟ້າ, ນ້ຳ, ໂທລະສັບ
5. ສິ່ງບໍລິການທີ່ຈຳເປັນສູນສຸຂະພາບ, ສະຖານີຕຳຫລວດການຄຸ້ມຄອງ ຂີ້ເຫຍື້ອ, ຖະໜົນ/ການຂົນສົ່ງ, ຫ້ອງການໄປສະນີ.

## ກ່ຽວກັບສະພາບຕົວຈິງ ແລະ ຄວາມດ້ອຍໂອກາດ

1. ໂຮງຮຽນ (ໄຟ) ບໍ່ມີລະບົບຕັດໄຟ, ເຄື່ອງມອດໄຟ
2. ສະໜາມຫລິ້ນ - (ສະໜາມ) ບໍ່ມີຮາວ ປ້ອງກັນ, ມີທາງອອກບ່ອນດຽວ
3. ສະຖານີແກັດ - (ໄຟໄໝ້), ແກດຮົ່ວ, ບໍ່ມີເຄື່ອງດັບໄຟ
4. ໜອງປາ - (ເລິກ, ມີພະຍາດ) ນ້ຳປົນເປື້ອນ
5. ໂບດ/ວັດ - ໂຄງສ້າງບໍ່ດີ, ອາຄານເປັນໄມ້ເກົ່າ

## ກ່ຽວກັບສະພາບທາງດ້ານເສດຖະກິດ-ສັງຄົມ

1. ລະບົບການຕັ້ງເຮືອນໂຄງສ້າງເຮືອນດີ ຫລືບໍ່ໄດ້ດີ, ສິ່ງອຳນວຍຄວາມ ສະດວກຕ່າງໆ
2. ສະພາບແວດລ້ອມ - ບ້ານໄກ້ຄຽງ, ສະອາດບໍ, ປັດສະຈາກໄພອັນຕະລາຍ
3. ໂຄງສ້າງຄອບຄົວ - ເປັນຄອບຄົວໃໝ່ ຫລື ຄອບຄົວດັ້ງເດີມ, ເດັກນ້ອຍ ດູແລກັນເອງຈຳນວນ ຫລັງຄາເຮືອນແອອັດ,ກະແຈກກະຈາຍ
4. ເງື່ອນໄຂການດຳລົງ ຊີວິດ - ກ. ສະພາບຂອງເດັກນ້ອຍ - ລ້ຽງດີ, ລ້ຽງບໍ່ໄດ້ດີ, ຢູ່ແບບແອອັດໃນເຮືອນ, ຂ. ເດັກໃນເກນອາຍຸເຂົ້າຮຽນ, ເດັກໄດ້ເຂົ້າຮຽນບໍ່ ຫລື ຢູ່ເຮືອນ, ມີຜູ້ໃຫ່ຍດູແລເດັກນ້ອຍຢູ່ເຮືອນບໍ່ ?

## ກ່ຽວກັບວິຖີຊີວິດ:

1. ກິດຈະວັດປະຈຳວັນ
2. ໂຄງສ້າງຄອບຄົວ



ການມີສ່ວນຮ່ວມຂອງຊຸມຊົນເຜົ່າຄວນໄດ້ຜິດຈາລະນາເອົາໃຈໃສ່, ກາແດງຫລວງນ້ຳທາ

4. ມີຄວາມເຂັ້ມແຂງ
5. ທັກສະ
6. ມີການບຳລຸງຮັກສາຄອບຄົວ
7. ອາຄານກໍ່ຄືທີ່ພັກອາໃສ / ສະຖານທີ່ປະຊຸມ
8. ທີມງານ, ຫົວໜ້າໄດ້ຮັບການຈັດຕັ້ງ

## 3. ການສ້າງແຜນທີ່ຊຸມຊົນ:

ໜຶ່ງ ໃນບັນດາແນວທາງ ທີ່ສຳຄັນ ຂອງການເກັບກຳຂໍ້ມູນ ການປະ ເມີນຄວາມອ່ອນແອ ແລະ ຄວາມສາມາດແມ່ນຜ່ານກິດຈະກຳຂອງການສ້າງແຜນທີ່ຊຸມຊົນ. ການສ້າງແຜນທີ່ຊຸມຊົນຈະຊ່ວຍ ໃຫ້ສາມາດກຳນົດ ຄວາມອ່ອນແອ ແລະ ຄວາມສາມາດ ໄດ້ລະອຽດຂຶ້ນລວມທັງ ເງື່ອນໄຂການ ດຳລົງຊີວິດ, ພຶດຕິກຳ ແລະ ປັດໃຈ ດ້ານສະພາບແວດລ້ອມ.

ປະຈຸບັນນີ້, ລະບົບ ຂໍ້ມູນທາງພູມສາດ (GIS) ສາມາດສະໜອງ ຂໍ້ມູນລະອຽດຫລາຍກ່ຽວກັບເຂດທີ່ມີຄວາມສ່ຽງຫລັກ ແລະ ຄວາມ ດ້ອຍໂອກາດທີ່ພົວພັນເຖິງ ໄພອັນຕະລາຍສະເພາະ. ຂໍ້ມູນປະເພດນີ້ ເໝາະ ກັບອົງກອນທີ່ເຮັດວຽກກ່ຽວກັບກິດຈະກຳການ ຫລຸດຜ່ອນຄວາມສ່ຽງ ຈາກໄພພິບັດ.

ສະນັ້ນ, ການກຳນົດ ແຜນທີ່ຊຸມຊົນ ຈະເຮັດໃຫ້ ສະມາຊິກ ຊຸມຊົນ ເຂົ້າໃຈ ແລະ ຮັບຮູ້ ຄວາມຈິງຢ່າງກ້ວາງຂວາງ ໃນການດຳລົງ ຊີວິດຂອງຕົນເອງ. ຂໍ້ມູນທາງດ້ານເຕັກໂນໂລຍີອາດຈະ ບໍ່ສາມາດ ສະທ້ອນ ບັນຫາດັ່ງກ່າວນີ້ເນື່ອງຈາກວ່າ ມັນຈຳເປັນຈະຕ້ອງປະຕິບັດກັບພຶດຕິກຳ, ທັດສະນະຄະ ຕິ, ເງື່ອນໄຂການດຳລົງຊີວິດແລະ ລັກສະນະສະເພາະຂອງຍົກຕົວຢ່າງ ແຜນທີ່ຂອງຊຸມຊົນໜຶ່ງອາດ ສະທ້ອນເຖິງ ເງື່ອນໄຂການລະບາຍນ້ຳ ແລະ ອາດຈະເປັນການ ພັງທະລາຍຂອງລະບົບ ເນື່ອງຈາກ ການສະສົມ ຂອງຂີ້ເຫຍື້ອ.

**ທີມງານຈະມີຄວາມຕ້ອງການກຳນົດປະເພດຂອງແຜນທີ່ດັ່ງນີ້:**

**ແຜນທີ່ 1:** ແຜນທີ່ທາງອາກາດ: ສະພາບລວມຂອງພູມມີປະເທດທີ່ກ່ຽວຂ້ອງກັບກັບເຂດທີ່ເຮົາຕ້ອງການຖ່າຍທາງອາກາດ.

**ແຜນທີ່ 2:** ແຜນທີ່ໄພອັນຕະລາຍ: ກຳນົດໄພອັນຕະລາຍ ແລະ ຄວາມສ່ຽງໃນຊຸມຊົນ, ແຕ່ລະໄພອັນຕະລາຍຄວນແຍກອອກແຜນທີ່ ແຕ່ລະ ອັນອອກຕ່າງຫາກ.

**ແຜນທີ່ 3:** ແຜນທີ່ຄວາມສາມາດ/ຊັບພະຍາກອນ: ສ້າງແຜນທີ່ທີ່ສະແດງໃຫ້ເຫັນຊັບພະຍາກອນຂອງຊຸມຊົນ ແລະ ຄວາມສາມາດ ຕ່າງໆ ພ້ອມທັງຄວາມແຕກຕ່າງ ດ້ານບົດບາດຍິງຊາຍ ຫລື ເຂດນຳໃຊ້ ທີ່ດິນ.

***ຜົນໄດ້ຮັບຂອງກິດຈະກຳທີ່ກ່າວ ຈະຕ້ອງໄດ້ຮັບການກວດຄືນຈາກຊຸມຊົນ, ການບັນທຶກຂໍ້ມູນຢ່າງລະອຽດລະອໍ ແລະ ການກຳນົດລະບົບເພື່ອລາຍງານເພື່ອໃຫ້ການກວດ ຂໍ້ມູນຮ່ວມກັບຊຸມຊົນໄດ້ຢ່າງເປັນລະບົບ.***

ອີກເທື່ອໜຶ່ງເມື່ອແຜນທີ່ທຸກຢ່າງໄດ້ຮັບການປັບປຸງແລ້ວ, ທີມງານຈະຕ້ອງເຮັດວິເຄາະຂໍ້ມູນ ແລະ ກຳນົດຜູ້ທີ່ມີຄວາມສ່ຽງກວ່າໝູ່. ຈາກນັ້ນ ແຜນທີ່ກໍຈະໄດ້ກຳນົດຂຶ້ນມາ (ເບິ່ງລາຍລະອຽດ ໃນແຜນທີ່ 4 ລຸ່ມນີ້).

## ການວິເຄາະຂໍ້ມູນຂອງທ່ານ

ວິທີທີ່ດີກໍຄືການວິເຄາະເປັນກຸ່ມ ແລະຕົວຢ່າງຕໍ່ໄປນີ້ໄດ້ຖືກກຳນົດ ແນວຄວາມຄິດທາງລົບ ແລະ ບວກຊຶ່ງອອກມາຈາກການວິ ເຄາະ

ແຜນທີ່: **ທາງລົບ:**

- ກຸ່ມເຮືອນທີ່ສ້າງບໍ່ໄດ້ມາດຖານ , ມີຄວາມສ່ຽງຕໍ່ໄພ ນໍ້າຖ້ວມ
- ປະຊາຊົນຍ້າຍຖິ່ນຖານ ເນື່ອງຈາກ ອັດຕາສ່ຽງສູງ ແລະ ຂາດການເອົາໃຈໃສ່ ໃນພື້ນທີ່
- ບ່ອນລະບາຍນໍ້າ ບໍ່ຖືກຕ້ອງເໝາະສົມ ພາໃຫ້ເກີດ ພະຍາດຜິວໜັງ, ເປັນຫວັດ ແລະ ອື່ນໆ.
- ຂາດການ ຈັດການ ກັບຂີ້ເຫຍື້ອ ພາໃຫ້ມີໜູມາອາໃສ ແລະ ການແຜ່ລະບາດ ຂອງແມງໄມ້
- ເຮືອນ ທີ່ຢູ່ເປັນກຸ່ມ ສ່ຽງຕໍ່ອັກຄີໄພ
- ພື້ນທີ່ທັງໝົດ ຢູ່ບໍລິເວນແມ່ນໍ້າ ຈະພາໃຫ້ນໍ້າຖ້ວມ.

### ທາງບວກ:

- 3 ລະດັບ ຂອງການ ສຶກສາ ທີ່ພົບເຫັນ ໃນເຂດໜຶ່ງ (ໂຮງຮຽນປະຖົມ, ມັດທະຍົມຕົ້ນ ແລະ ປາຍ)
- ຄວາມຕ້ອງການ ຝາກຮູ້, ແມ່ທັກສະລະບົບຟາມລ້ຽງປາ
- ສູນບໍລິການສຸຂະພາບ ຮັບໃຊ້ການຮັກສາສຸຂະພາບຕາມຕ້ອງການ
- ການຄຸ້ມຄອງແບບໃໝ່ ສຳລັບ ສຸຂະອານາໄມ ປະຈຸບັນນີ້ໄດ້ບັນລຸເລື້ອງສຸຂະພາບແລ້ວ
- ຕ້ອງການໃນການ ປຶກສາຫາລືບັນຫາຕ່າງໆ ທີ່ກະທົບຕໍ່ຊຸມຊົນ

## ແຜນທີ່ 4: ແຜນວາດ

ເມື່ອແຕ້ມແຜນວາດ ຄວນພິຈາລະນາ ຂໍ້ຕ່າງຕ່າງໆ ດັ່ງຕໍ່ໄປນີ້:

- ການວິເຄາະຂໍ້ມູນ ຂອງແຜນທີ່ອື່ນ (ແຜນທີ່ທາງອາກາດ, ແຜນທີ່ໄພອັນຕະລາຍ/ຄວາມດ້ອຍໂອກາດ, ແຜນທີ່ຄວາມສາມາດ/ຊັບພະຍາກອນ).
- ພາກສ່ວນໜຶ່ງ ຂອງການວິເຄາະຂໍ້ມູນ ມັນໄດ້ຖືກກຳນົດ ໄວ້ວ່າພື້ນທີ່ ທີ່ມີຄວາມສ່ຽງສູງກວ່າໝູ່ ແລະ ຕ້ອງການໃຫ້ມີຄວາມເຂົ້າໃຈ ຫລາຍ ກ່ຽວກັບຄວາມອ່ອນແອ.
- ການວິເຄາະຄວາມສ່ຽງ ໄດ້ຖືກຂະຫຍາຍ ມາສູ່ການພິຈາລະນາຄວາມແຕກຕ່າງດ້ານພະລັງ ຂອງໄພອັນຕະລາຍ ທີ່ຈະສົ່ງຜົນກະທົບຕໍ່ຊຸມຊົນ.

ອົງປະກອບອັນນ້ອຍໆຂ້າງລຸ່ມນີ້: ຄວນຖືກລວມເຂົ້າກັນເພື່ອດຳເນີນການປະເມີນຜົນສະພາບໃນສະເພາະໜ້າ:

- ປະເພດຂອງພື້ນດິນ/ເງື່ອນໄຂຂອງພື້ນທີ່
- ການດຳລົງຊີວິດ ໃນເຂດສະເພາະ ຂອງການວິເຄາະ
- ລະດັບ ຂອງອົງການຈັດຕັ້ງ ທ້ອງຖິ່ນ
- ໄພອັນຕະລາຍຕົ້ນຕໍ ແລະ ຄວາມສ່ຽງ
- ເງື່ອນໄຂ ທີ່ເພີ້ມຄວາມອ່ອນແອ
- ຄວາມເຊື່ອຖື ແລະ ຄຸນຄ່າ
- ຂີດຄວາມສາມາດ



ການວິເຄາະຄວາມສ່ຽງໂດຍຜ່ານການສ້າງແຜ່ນທີ່, ກາແດງໄທ




## 4. ປະຊຸມຮ່ວມກັບບັນດາສະມາຊິກໃນຊຸມຊົນ:

ການປະຊຸມຮ່ວມກັບຊຸມຊົນຈະມີສອງຈຸດປະສົງໃຫຍ່:

ກ. ລວບລວມຂໍ້ມູນໂດຍນຳໃຊ້ ເຄື່ອງມືທີ່ສະທ້ອນໃຫ້ເຫັນຢູ່ ຂ້າງລຸ່ມນີ້ ,
ຂ. ຮັບຮອງຂໍ້ມູນ ທີ່ໄດ້ຈາກ ການສັງເກດ ໂດຍກົງ ຈາກກຸ່ມທີ່ຮັບມາ ຈາກ ຜູ້ໃຫ້ຂໍ້ມູນຫລັກ,

**ຈົ່ງຈຳໄວ້ວ່າ** ຂະບວນການມີສ່ວນຮ່ວມ ແມ່ນມີ ຄົນຫລາຍ. **ບໍ່ແມ່ນການຝຶກອົບຮົມ.** ນຳໃຊ້ເຄື່ອງມື ແລະ ວິທີການ (ຄຳຖາມ ແລະຕຳຕອບ, ກຸ່ມເຮັດວຽກ,ລະດົມສະໝອງ ອື່ນໆ, ທ່ານຕ້ອງໄດ້ ຕື່ມເຕັມຕາຕະລາງລຸ່ມນີ້ຮ່ວມກັບບັນດາສະມະຊິກຊຸມຊົນ:

- ຕາຕະລາງປະຫວັດຄວາມເປັນມາ *(ເບິ່ງການສະເໜີລຸ່ມນີ້)*
- ທີ່ມາທາງດ້ານປະຫວັດສາດ *(ເບິ່ງການສະເໜີລຸ່ມນີ້)*
- ປະຕິທິນ ລະດູການ *(ເບິ່ງການສະເໜີລຸ່ມນີ້)*
- ວິເຄາະ ອົງການຈັດຕັ້ງ ແລະ ສັງຄົມ *(ເບິ່ງການສະເໜີລຸ່ມນີ້)*

### ປະຕິທິນປະຫວັດຄວາມເປັນມາ

**ຈົ່ງຈຳໄວ້ວ່າ**: ໃນກິດຈະກຳນີ້, ທີມງານຈະສ້າງສອງ ຕາຕະລາງ:

- **ຕາຕະລາງ ທີ 1**: ການເປັນປະຫວັດທີ່ເຫັນປະຈັກຕາ - ຂໍ້ມູນ ທີ່ເປັນເສັ້ນສະແດງ
- **ຕາຕະລາງ ທີ 2**: ທີ່ມາທາງດ້ານປະຫວັດສາດ - ຂໍ້ມູນທີ່ຂຽນ

ທີມງານຕ້ອງລວບລວມ ຂໍ້ມູນ ກ່ຽວກັບສິ່ງທີ່ເກີດຂື້ນ ໃນໄລຍະຜ່ານມາ ທີ່ຊຸມຊົນມີປະຫວັດ ແລະ ການປະຈັກຕາທາງປະຫວັດສາດ, ປະຫວັດຄວາມເປັນມາ. ພື້ນທີ່ທີ່ກ່ຽວຂ້ອງຂອງການວິເຄາະຄວນໃຫ້ກວ້າງເທົ່າທີ່ຈະກວ້າງໄດ້. ນີ້ອາດລວມມີບັນຫາພະຍາດ, ດ້ານອາຫານ, ວຽກງານ, ໄພພິບັດຕົ້ນຕໍ, ຄວາມຮຸນແຮງ, ອາດສະຍາກຳ, ຕົ້ນໄມ້ ແລະ ວິຖີການດຳລົງຊີວິດຂອງຊຸມຊົນ ຊຶ່ງຈະເຮັດໃຫ້ພວກເຮົາ ມອງເຫັນໄພອັນຕະລາຍໃນຜ່ານມາ, ການປ່ຽນແປງໂດຍທຳມະຊາດ, ຄວາມຮຸນແຮງ ແລະ ພຶດຕິກຳ (ການພົວພັນ ໂດຍບັງເອີນ ລະຫວ່າງຄວາມສ່ຽງ ແລະ ຄວາມດ້ອຍໂອກາດ), ເຮັດໃຫ້ພວກເຮົາຮັບຮູ້ເຖິງການປ່ຽນແປງຕ່າງໆ ໃນເວລາທີ່ຜ່ານມາ. ຊຶ່ງ ຈະຊີ້ໃຫ້ເຫັນການເບິ່ງປະຫວັດຄວາມເປັນມາ, ສະພາບທາງດ້ານ ປະຫວັດສາດ.

ໃນເມື່ອ ທ່ານສຳເລັດ ຕາຕະລາງນັ້ນແລ້ວ, ໃຫ້ສົມທົບຜົນໄດ້ຮັບ ຈາກການສັງເກດໂດຍກົງກັບຊຸມຊົນເພື່ອໃຫ້ໄດ້ ຂໍ້ສະເໜີແນະຈາກ ຊຸມຊົນ, ໄດ້ຂໍ້ມູນ ແລະ ຄວາມເປັນເຈົ້າຕົນເອງ ຂອງຊຸມຊົນ. ຕາຕະລາງທີ່ໄດ້ສ້າງ ຂື້ນມາ ຈາກກຸ່ມຕ້ອງສະທ້ອນໃຫ້ເຫັນປະຫວັດ ຄວາມເປັນມາຂອງຊຸມຊົນ. ກຸ່ມຄວນໄດ້ຊຸກຍູ້ ຖາມຄຳຖາມ ເພື່ອໃຫ້ໄດ້ຂໍ້ມູນ, ຍົກຕົວຢ່າງ

- ຕາຕະລາງນີ້ ບອກຫຍັງ ກັບຂ້ອຍ?
- ມີຫຍັງເກີດຂື້ນ?
- ເປັນຫຍັງ ຈຶ່ງເກີດຂື້ນ?
- ທ່າອຽງ?

ການວິເຄາະ ຕາຕະລາງ ຕ້ອງປະຕິບັດ ໂດຍຜ່ານ ການສົມທຽບ ຂໍ້ມູນທາງຕັ້ງ ແລະ ທາງຂວາງ, ການພັດທະນາ ແລະ ເຫດການ ທີ່ເກີດຂື້ນໃນທິດສັດຕະຫວັດຜ່ານມາຈະຢູ່ໃນແນວຂວາງ ຊຶ່ງຈະກົງກັນຂ້າມ ກັບແນວ ຕັ້ງ ທີ່ສະແດງໃຫ້ເຫັນໃນປີຕ່າງໆ.

### ສະພາບປະຫວັດຄວາມເປັນມາ

ຕະຫລອດໄລຍະການລວບລວມຂໍ້ມູນ ຈົ່ງເບິ່ງທຸກໆອົງປະກອບທີ່ເປັນໄປໄດ້ ທີ່ປົກອ້ອມການພັດທະນາຊຸມຊົນ. ມັນຄວນເລີ້ມຈາກ ການເຂົ້າເຖິງການນຳໃຊ້ທີ່ດິນ, ການສ້າງເຮືອນຫລັງທຳອິດ, ປະເພດຂອງການປູກພືດ, ສັດລ້ຽງ. ຕ້ອງຊີ້ໃຫ້ເຫັນ ສິ່ງອຳນວຍຄວາມສະ ດວກ, ຄວນຈະເລີ້ມເມື່ອໃດ ແລະ ເຮັດແນວໃດ, ການພັດທະນາໂຮງຮຽນ, ການພັດທະນາເສດຖະກິດ ແລະໄພພິບັດຕົ້ນຕໍ ເບິ່ງຕົວຢ່າງຂ້າງລຸ່ມນີ້.

**ຕາຕະລາງທີ 3:** ຕົວະ່າງຂອງປະຫວັດຄວາມເປັນມາ

| ປີ | ລາຍການ |
|---|---|
| 1970 | ກໍ່ຕັ້ງຊຸມຊົນ |
| 1972 | ການຍ້າຍຖິ່ນຖານ ຂອງຊຸມຊົນ 5,000 ຄົນ ເຂົ້າມາຢູ່ |
| 1973 | ສ້າງໂຮງຮຽນຫລັງທຳອິດ, ສຸກສາລາ ແລະ ອື່ນໆ... |
| 1980 | ພາຍຸໄຕ້ຝຸ່ນ ນີນາ ກະທົບເຂົ້າໃສ່ພື້ນທີ່ |
| 1981 | ສາຂາກາແດງ ສ້າງໄດ້ອາສາສະມັກ 5 ຄົນ |
| 1983 | ວັດຫລັງທຳອິດ ທີ່ສ້າງຂື້ນ |
| 1990 | ສຸກສາລາສ້າງສຳເລັດ |

## ປະຕິທິນລະດູການ:

ເຄື່ອງມືດັ່ງກ່າວສາມາດນຳໃຊ້ ເພື່ອສະແດງໃຫ້ເຫັນເຫດການ ທີ່ແຕກຕ່າງກັນ (ພາຍຸໄຕ້ຝຸ່ນ, ນ້ຳຖ້ວມ), ປະສົບການ (ຂຸດເຊົາ, ແຫ້ງແລ້ງຍາວນານ), ກິດຈະກຳ (ງານບຸນ, ການເກັບກ່ຽວ), **ແລະ ເງື່ອນໄຂ (ສັງຄົມ ແລະ ເສດ ຖະກິດ) ໃນໄລຍະຮອບປີ.** ກຳນົດໄລຍະເວລາເຄັ່ງຮ້ອນ, ໄພອັນຕະລາຍ, ພະຍາດ, ຄວາມອຶດຫິວ, ໜີ້ສິນ, ຄວາມດ້ອຍໂອກາດ. ກຳນົດສິ່ງປະຊາ ຊົນເຮັດ ໃນໄລຍະນີ້, ພວກ ເຂົາເຈົ້ານຳໃຊ້ ຊັບພະຍາກອນໃນການທຳມາຫາກິນແນວໃດ, ເວລາໃດພວກເຂົາເຈົ້າຝາກເງິນຢູ່ທະນາຄານ, ເວລາໃດ ພວກເຂົາເຈົ້າມີເວລາສຳລັບກິດຈະກຳຕ່າງໆຂອງຊຸມຊົນ ແລະ ອັນໃດທີ່ເປັນຍຸດທະສາດທີ່ພວກເຂົາເຈົ້າໄດ້ນຳໃຊ້. ປະຕິທິນທີ່ກຳນົດການແບ່ງ ວຽກສະເພາະລະຫວ່າງຍິງ ແລະ ຊາຍ ໃນເວລາເກີດໄພພິບັດ ແລະ ໃນເວລາທຳມະດາ. ປະເພດຂອງບັນຫາທີ່ແຕກຕ່າງກັນ ໄດ້ກຳນົດເຂົ້າໃສ່ເສັ້ນຕັ້ງ ແລະ ເດືອນຕ່າງໆຂອງປີຢູ່ໃນເສັ້ນຂວາງ. ໝາຍໄຂວ່ຕົນກາໃສ່ໃນເດືອນໃດໜຶ່ງ ດັ່ງຕົວຢ່າງຂ້າງລຸ່ມນີ້.

## ການວິເຄາະ ອົງການຈັດຕັ້ງ ແລະ ສັງຄົມ:

ແຕ້ມເສັ້ນສະແດງທີ່ບົ່ງບອກອົງການຈັດຕັ້ງຕົ້ນຕໍ, ກຸ່ມ ແລະ ບຸກຄົນໃນສັງຄົມ, ສາຍພົວພັນ ແລະ ລະດັບຄວາມສຳຄັນ ຂອງພວກເຂົາເຈົ້າ. ເສັ້ນສະແດງສ້າງຂຶ້ນມາ ເພື່ອກຳນົດອົງການຈັດຕັ້ງ (ພາຍໃນທ້ອງຖິ່ນ ແລະ ພາຍນອກ), ບົດບາດຄວາມສຳຄັນ ທີ່ປະຊາຊົນເຂົ້າໃຈວ່າເຂົາເຈົ້າມີ. ກຳນົດສ່ວນບຸກຄົນ, ກຸ່ມຄົນ ແລະ ອົງການຈັດຕັ້ງທີ່ມີບົດບາດໃນການຕອບໂຕ້ໄພພິບັດ ແລະ ສາມາດສະໜັບສະໜູນ ຊຸມຊົນ. ການດຳເນີນການດັ່ງກ່າວນີ້ມີບາດກ້າວດັ່ງຕໍ່ໄປນີ້:

1. ພາກປະຊຸມລວມ, ຜູ້ເຂົ້າຮ່ວມ ກຳນົດ ອົງການຈັດຕັ້ງຫລັກ (6-8) ໃນຊຸມຊົນສະເພາະ
2. ອະທິບາຍ ອົງການຈັດຕັ້ງ ແລະ ຄວາມສຳຄັນ ຂອງອົງການຈັດຕັ້ງໃນລະດັບ 1-5. 5 ໝາຍເຖິງສູງສຸດ ແລະ 1 ໝາຍເຖິງຕ່ຳສຸດ.
3. ຈາກນັ້ນ ອົງການຈັດຕັ້ງ ກໍຈະໄດ້ຖືກຈັດລຽງ ກ່ຽວກັບຄວາມໃກ້ຊິດຂອງເຂົາເຈົ້າ ຕໍ່ຊຸມຊົນ, 5 ໝາຍເຖິງໃກ້ຊິດຊຸມຊົນຫລາຍທີ່ສຸດ ແລະ 1 ໝາຍເຖິງຫ່າງເຫີນຊຸມຊົນ.

ເຄື່ອງມືນີ້ ສະແດງໃຫ້ເຫັນວ່າ ບາງຄັ້ງ ອົງການຈັດຕັ້ງກໍມີການກ່ຽວຂ້ອງກັບຊຸມຊົນສູງ, ແຕ່ຫ່າງໄກຕໍ່ການບໍລິການຄວາມຕ້ອງການຂອງຊຸມຊົນ. ຍັງມີອົງການຈັດຕັ້ງອື່ນອີກ ທີ່ເຮັດວຽກໃກ້ຊິດກັບຊຸມຊົນ, ແຕ່ບໍ່ເປັນທີ່ຍອມຮັບໂດຍຊຸມຊົນສົມກັບວ່າຂື້ນກັບເຂົາເຈົ້າ. ແນວຄວາມຄິດທົ່ວໄປກໍເພື່ອສະທ້ອນໃຫ້ເຫັນວ່າ ອົງການຈັດຕັ້ງ ສາມາດສືບຕໍ່ ມີການກ່ຽວຂ້ອງໃກ້ຊິດ ກັບຄວາມຕ້ອງການຂອງຊຸມຊົນ ໃນຄະນະທີ່ບັນດາການຈັດເຫລົ່ານີ້ ຫາກໃກ້ຊິດກັບຊຸມຊົນ ກໍ່ສາມາດກາຍເປັນສ່ວນກ່ຽວຕໍ່ຄວາມຕ້ອງການຂອງຊຸມຊົນຫລາຍຂຶ້ນ, ນຳໃຊ້ຂໍ້ມູນ ຈາກປະຊາຊົນ ໃນພື້ນທີ່ດີກວາ ທັງສັງລວມເອົາໃນນາມຂອງເຂົາເຈົ້າ ອາດສາມາດຫລຸດຜ່ອນ ການທີ່ບໍ່ເປັນເຈົ້າຕົນເອງຂອງປະຊາຊົນ.

**ຈົ່ງຈຳໄວ້ວ່າ:** ເພື່ອກຳນົດເມື່ອຈັດລຽງລະດັບໃຫ້**ສະມາຊິກແຕ່ລະຄົນຂອງຊຸມຊົນຈັດລຽງລະດັບຂອງຕົນເອງ**ໃນເຈ້ຍ, ຈາກນັ້ນກໍຈະເສື່ອມ ຕໍ່ກັບຄຳ ຕອບທີ່ຈະເຮັດໃຫ້ພວກເຮົາເຫັນໄດ້ເປີເຊັນ ທີ່ເປັນຕົວແທນ ຂອງທຸກລະດັບ.

**ຕາຕະລາງທີ 4 :** ຕົວຢ່າງຂງປະຕິທິນລະດູການ

| ເດືອນ | [illegible] | 2 | [illegible] | 4 | [illegible] | 6 | [illegible] | 8 | [illegible] | 10 | [illegible] | 12 |
|---|---|---|---|---|---|---|---|---|---|---|---|---|
| ລາຍຕ່ຳ | | | | x | | | x | x | x | | | |
| ລາຍຮັບສູງ | x | x | x | | | | | | | | x | x x |
| ຊອກຫາເຮັດວຽກ ແລະຍ້າຍຖິ່ນຖານ | x | x | x | x | x | x x | | | | | x | x x |
| ລະດູການເຈັບປ່ວຍຫຼາຍ | | x | x | x | | | | | x | x | | x |
| ອຸປະຕິເຫດທ້ອງຖະໜົນ | | | | x | | | | | | | | x |
| ໄຂ້ຫວັດ, ໄອ | x | | | | | | | | | | x | x |
| ພະຍຸ | | | | | | x | x | x | x | x | x | |
| ໄຟໄໝ້ປ່າ | | x | | x | | | | | | | | |
| ແຫ້ງແລ້ງ | | | | | | x | x | x | | | | |
| ນ້ຳຖ້ວມ | | | | | | | | | x | x | x | |
| ໄຟໄໝ້ເຮືອນ | | | | | | | | | | | | x |

**ຕາຕະລາງທີ 5 :** ຕົວຢ່າງຂອງການວິເຄາະອົງການຈັດຕັ້ງ ແລະ ສັງຄົມ

| ອົງການຈັດຕັ້ງ | [illegible] | ສະເລຍ | [illegible] | ສະເລຍ |
|---|---|---|---|---|
| ສະຫະພັນແມ່ຍິງ | (1-1-2-4-2) | 3 | (1-1-2-1-1) | 1.2 |
| ກາແດງ/ກາຊີກວົງເດືອນແດງ | (4-4-5-5-2) | 4 | (2-3-4-5-5) | 3.8 |
| ຊາວໜຸ່ມ | [illegible] | 2.6 | [illegible] | 2.5 |
| ກອງທຶນຊາວນາ | (2-4-4-5-4) | 3.8 | (1-5-4-5-5) | 4 |
| ອົງການ ຕ້ານເອດ | (1-4-5-4-1) | 3 | (1-5-5-4-2) | 3.4 |
| ສຸກສາລາ | (3-5-5-3-5) | 4.2 | (5-5-4-5-5) | 4.8 |

ຈາກການປຶກສາຫາລືໃນການຈັດຕັ້ງປະຕິບັດໂດຍຜ່ານແຜນທີ່, ກາແດງກຳປູເຈຍ



**ບາງຄຳຖາມອາດຊ່ວຍທ່ານໄດ້:**

- ປະຫວັດ ຂອງອົງການຈັດຕັ້ງ ເປັນແນວໃດ ?
- ສ້າງຂຶ້ນເມື່ອໃດ ?
- ເປັນຫຍັງ ຈຶ່ງຖືກສ້າງຂຶ້ນ ?
- ມີສະມາຊິກ ຈຳນວນຈັກຄົນ, ທ້າວທັນ, ບໍ່ທ້າວທັນ ?
- ສະມາຊິກເພີ້ມຂື້ນ ຫລື ຫລຸດລົງ ?
- ເຂົາມີສ່ວນຮ່ວມແນວໃດ ເວລາມີປະຊຸມ?
- ເຂົາມີສ່ວນໃນການຕັດສິນບັນຫາແນວໃດ ?
- ກຸ່ມມີແຜນພັດທະນາຊຸມຊົນບໍ ?
- ຄະນະກຳມະການ ຂອງກຸ່ມເຮັດວຽກຢູ່ບໍ ?
- ກຸ່ມໄດ້ປະກອບສ່ວນຫຍັງແດ່ຕໍ່ຊຸມຊົນໃນໄລຍະຜ່ານມາ ?

## 5. ການວິເຄາະຂໍ້ມູນ ແລະ ການກຳນົດລະບົບ

ເມື່ອທ່ານ ແລະ ທີມງານຂອງທ່ານກັບຈາກວຽກ ຢູ່ສະໜາມ (ມາຮອດ ສຳນັກງານກາແດງ, ໂຮງແຮມ, ເຕັນ, ເຮືອນ) ທີມງານ ຕ້ອງ ກຳນົດ ຕາຕະລາງວິເຄາະໄພອັນຕະລາຍ ທີ່ຜູ້ເຮັດການປະເມີນຕົວຈິງຈະຮັບຮູ້. ດັ່ງຕາຕະລາງລຸ່ມນີ້.

ສິ່ງທ້າທາຍຫລັກໃນທີ່ນີ້ ກໍຄືໃຫ້ຮັວ່າ ຈະເຮັດແນວໃດ. ຖ້າຫາກປະຕິບັດໄດ້ຢ່າງເໝາະສົມ, ຜົນໄດ້ຮັບຂອງການເຮັດວຽກ ກໍຈະ ມີຄຸນຄ່າ ຍິ່ງໆຂຶ້ນເພື່ອເຮັດສຳເລັດຂັ້ນຕອນຕ່າງໆ. ຜົນໄດ້ຮັບຈາກ ວຽກດັ່ງກ່າວນີ້ກໍຈະໄດ້ຖືກນຳໃຊ້ ພາຍຫລັງໃນບົດອື່ນໆ. ທົບທວນ ຂໍ້ມູນຂອງ ທ່ານເພື່ອໃຫ້ທ່ານ ເຂົ້າໃຈໄດ້ດີຂຶ້ນ:

### 1. ຄວາມສ່ຽງແມ່ນຫຍັງ

a. ກຳນົດຄວາມສ່ຽງຢູ່ຊຸມຊົນ.

b. ກຳນົດຜົນ ກະທົບທຸກຢ່າງ ທີ່ຮ້າຍແຮງ ໃນກໍລະນີໄພອັນຕະລາຍທີ່ຮ້າຍແຮງອາດເກີດຂຶ້ນເປັນຈິງ(ຊຶ່ງຈະພາໃຫ້ພວກເຮົາເຂົ້າໃຈວ່າຈະມີຄວາມສ່ຽງອັນໃດ, ຖ້າຫາກໄພອັນຕະລາຍເກີດຂຶ້ນເປັນປະຈຳ. ການກຳນົດຜົນກະທົບ ແນໃຈວ່າຄວາມອ່ອນແອລວມມີຜົນກະທົບແບບມີໂຄງສ້າງ, ແບບບໍ່ມີໂຄງສ້າງ, ກະທົບທາງສັງຄົມ, ເສດຖະກິດ ແລະ ອື່ນໆ), ລວມຄວາມແລ້ວ ຄວາມອ່ອນແອໃນຊຸມຊົນແມ່ນຫຍັງ ສຳລັບຄວາມສ່ຽງ ທີ່ຈະເກີດຂຶ້ນ.

### 2. ອັນໃດເຮັດໃຫ້ຕົນອ່ອນແອ

a. ກຳນົດທຸກໆຄວາມສາມາດ ທີ່ມີໃນຊຸມຊົນ ທີ່ສາມາດ ຫລຸດຜ່ອນຄວາມສ່ຽງໄດ້ກຳນົດໄວ້ ກໍ່ຄືຄວາມສາມາດເຫລົ່ານັ້ນເປັນທີ່ຕ້ອງການ ເພື່ອປະເຊີນໜ້າກັບໄພພິບັດ.

**ຕາຕະລາງທີ 6 :** ຕົວຢ່າງຂອງການວິເຄາະບໍ່ເກີດໄພອັນຕະລາຍ

| ໄພອັນຕະລາຍ/ບັນຫາ /ເລື້ອງລາວຕ່າງໆ | [redacted] | ຄວາມດ້ອຍໂອກາດ (ຄວາມອ່ອນແອ) | [redacted] | ຄວາມຕ້ອງ ຜ່ອນຄາຍ | [redacted] |
|---|---|---|---|---|---|
| | [redacted] | 1.1 | [redacted] | 1. | [redacted] |
| | 2. [redacted] | 1.2 | 2. [redacted] | 2. | [redacted] |
| | [redacted] | 1.3 | [redacted] | | [redacted] |
| | 4. [redacted] | 1.4 | [redacted] | | [redacted] |
| | [redacted] | 2.1 | [redacted] | | [redacted] |

3. ຄວາມສາມາດມີຫຍັງແດ່ ?
   a. ກຳນົດຄວາມຕ້ອງການທີ່ຮີບດ່ວນ ໃນເມື່ອເກີດໄພພິບັດ.
   b. ກຳນົດກິດຈະກຳ ການຫລຸດຜ່ອນທີ່ເປັນໄປໄດ້ໃນສະພາບທີ່ຖືກຂົ່ມຂູ່.

*ຂໍໄວ້ວ່າຜົນໄດ້ຮັບຂອງກິດຈະກຳທັງກ່າວ ຈະຕ້ອງໄດ້ຮັບການ ກວດຄືນຈາກຊຸມຊົນ, ການບັນທຶກຢ່າງລະອຽດ ຂໍ້ມູນ ແລະ ການກຳນົດລະບົບທີ່ຮອບຄອບຈະເຮັດ ໃຫ້ການກວດຂໍ້ມູນ ຮ່ວມກັບຊຸມຊົນ ໄດ້ຢ່າງເປັນລະບົບ.*

## ມື້ທີ 2

1. ການປະຊຸມຮ່ວມກັບຊຸມຊົນ ເພື່ອແລ່ກປ່ຽນຜົນໄດ້ຮັບ ຈາກການວິເຄາະໃນ ມື້ທີ 1 ຮ່ວມກັບສະມາຊິກຊຸມຊົນ ເພື່ອໃຫ້ໄດ້ຂໍ້ມູນເພີ້ມເຕີມ.
2. ກວດກາແຜນທີ່ ຮ່ວມກັບ ບຸກຄົນສຳຄັນ ທີ່ໃຫ້ຂໍ້ມູນ.
3. ກຸ່ມເປົ້າໝາຍ: ເດັກນ້ອຍ, ຜູ້ຍິງ, ຊາວນາ/ຊາວປະມົງ/ ກຳມະກອນ(ການວິເຄາະ ຈະເນັ້ນໃສ່ໄພອັນຕະລາຍ, ຄວາມ ດ້ອຍໂອກາດ ແລະ ທາງເດີນ).
4. ກຳນົດລະບົບ ຂອງ ຂໍ້ມູນ ແລະ ກະກຽມ ຂັ້ນຕອນ ຂອງມື້ຕໍ່ໄປ "ຂະບວນການປ່ຽນຖ່າຍ".

### 1. ປະຊຸມຮ່ວມກັບຊຸມຊົນ ເພື່ອສົມທົບຜົນໄດ້ຮັບຈາກການວິເຄາະຂອງ ມື້ທີ 1 ຮ່ວມກັບສະມາຊິກຊຸມຊົນ ເພື່ອໃຫ້ໄດ້ຂໍ້ມູນ ເພີ້ມເຕີມ:

ແລກປ່ຽນທຸກຕາຕະລາງທີ່ສ້າງຂື້ນຮ່ວມກັບຊຸມຊົນ ເພື່ອໃຫ້ເຮັດສຳເລັດການບັນທຶກຂໍ້ມູນ ແລະ ມີຄວາມຖືກຕ້ອງ ສຳລັບຊຸມຊົນ ຊຶ່ງຂໍ້ມູນກ່ຽວຂ້ອງກັບພວກເຂົາເຈົ້າ. ປ່ຽນທຸກຢ່າງທີ່ຈຳເປັນໃນຕາຕະລາງ ຕາມການຄິດເຫັນຂອງຊຸມຊົນ.ວິທີການປະຕິບັດໃນການແລກປ່ຽນຜົນໄດ້ຮັບດັ່ງກ່າວນີ້ ກໍເພື່ອສົມທົບຜົນໄດ້ຮັບກັບສະມາຊິກໃນຊຸມຊົນ. ຈາກນັ້ນ ກໍຈະເລີ້ມກັບກຸ່ມ ຍ່ອຍ (ມີການຈັບສະຫລາກ ຫລື ອີງຕາມ ກຸ່ມບົດບາດຍິງຊາຍ ແລະ ອື່ນໆ). ແຕ່ລະກຸ່ມຍ່ອຍ ຈະໄດ້ຮັບ ຕາຕະລາງໜຶ່ງ ແຕກຕ່າງຈາກ ຂອງກຸ່ມອື່ນ ແລະ ໃຫ້ໃຊ້ເວລາ 15 ນາທີ ເພື່ອທວນຄືນ ແລະ ສະໜອງຂໍ້ມູນ. ຈາກນັ້ນ ກໍຈະກາຍໄປຫາກຸ່ມອື່ນ. ໃນເມື່ອແຕ່ລະກຸ່ມ ໄດ້ຕາຕະລາງໃໝ່, ແຕ່ລະກຸ່ມຈະເບິ່ງຂໍ້ມູນເບື້ອງຕົ້ນ ທີ່ເກັບກຳໄດ້ ສົມທົບກັບຂໍ້ມູນຈາກ ກຸ່ມທີ່ຜ່ານມາ, ແລ້ວພວກເຂົາ ຈະເພີ້ມຂໍ້ ມູນໃຫມ່ທີ່ກ່ຽວຂ້ອງເຂົ້າຕື່ມ. ຂັ້ນຕອນດັ່ງກ່າວນີ້ ຄວນສືບຕໍ່ຈົນຮອດການທວນຄືນ ຕາຕະລາງທັງໝົດໃຫ້ສຳເລັດ.

### 2.ກວດກາແຜນທີ່ຮ່ວມກັບບຸກຄົນສຳຄັນທີ່ໃຫ້ຂໍ້ມູນ:

ທີມງານຂອງທ່ານ ໄດ້ກຳນົດແຜນທີ່ສະບັບທຳອິດແລ້ວ. ຕໍ່ໄປແມ່ນຕ້ອງການຂໍ້ມູນ ຈາກບຸກຄົນສຳຄັນທີ່ເປັນຜູ້ໃຫ້ຂໍ້ມູນ ເພື່ອກຳນົດ ເຂົ້າໃນແຜນທີ່ ແລະ ສະເໜີໃຫ້ເຂົາເຈົ້າ ສະໜອງຂໍ້ມູນທີ່ກ່ຽວຂ້ອງ ເພື່ອໃຫ້ຂໍ້ມູນມີຄຸນນະພາບ ທີ່ປະກົດຢູ່ໃນແຜນທີ່.ຕ້ອງໃຫ້ແນ່ໃຈວ່າບຸກຄົນສຳຄັນຜູ້ທີ່ໃຫ້ຂໍ້ມູນເຂົ້າໃຈວ່າແຜນທີ່ສະບັບສຸດທ້າຍ ພ້ອມທັງຂໍ້ມູນໃໝ່ ທີ່ໄດ້ຈາກພວກເຂົາເຈົ້າຈະໄດ້ນຳສະເໜີ ໃນຂະນະທີ່ປະຊຸມຮ່ວມກັບຊຸມຊົນ, ຊຶ່ງຈະໄດ້ຈັດຂຶ້ນໃນສາມມື້ຕໍ່ພາຍຫລັງ.



ການສັງເກດໂດຍກົງເປັນສິ່ງທີ່ຈຳເປັນ, ການເສື່ອມສານເຂົ້າໃນການປະເມີນຄວາມອ່ອນແອ ແລະຄວາມສາມາດ, ອີງການກາແດງລາວ

ບັນດາເດັກນ້ອຍ ຄວນມີສ່ວນຮ່ວມໃນຂະບວນການປະເມີນຄວາມອ່ອນແອ ແລະຄວາມສາມາດ, ອີງການກາແດງລາວ



## 3.ກຸ່ມເປົ້າໝາຍ:

ກຸ່ມຕ້ອງກະກຽມການນັດພົບ ກ່ອນລ່ວງໜ້າ ເພື່ອເສີມຂະຫຍາຍ ກອງປະຊຸມຂອງກຸ່ມເປົ້າໝາຍ. ໂດຍສະເພາະເປັນການສົ່ງເສີມ ກິດຈະກຳຂອງກຸ່ມເປົ້າໝາຍ ກັບເດັກນ້ອຍ ແລະ ຜູ້ເຖົ້າ, ຊຶ່ງເປັນ ສ່ວນໜຶ່ງຈາກການພິຈາລະນາທາງ ດ້ານສັງຄົມເສດຖະກິດ. ຈຳເປັນທີ່ສຸດທີ່ຈະຕ້ອງຮູ້ກົດ ໝາຍທ້ອງຖິ່ນ ແລະ ມາດຕາການ ຕ່າງໆ ເພື່ອເຮັດວຽກ ກັບເດັກນ້ອຍ ແລະ ຜູ້ເຍົາໄວ. ໃນທຸກໆ ສະພາບການ, ຄູອາຈານ ຫລື ຜູ້ຮັບຜິດຊອບເຮັດວຽກທາງສັງຄົມຕ້ອງມີໜ້າ.

ປະເພດເຄື່ອງການສຳພາດ ແຕກຕ່າງກັນ:

- ສຳພາດກຸ່ມ
- ສົນທະນາກັບກຸ່ມເປົ້າໝາຍ
- ສຳພາດບຸກຄົນ
- ສຳພາກບຸກຄົນສຳຄັນ ທີ່ໃຫ້ຂໍ້ມູນ

ຄຳຖາມດັ່ງຕໍ່ໄປນີ້ຈະຊ່ວຍທ່ານ ເໝືອນກັບຄູ່ມືສຳລັບການສົນທະ ນາຂອງກຸ່ມເປົ້າໝາຍຂອງທ່ານຂະນະທີ່ເຮັດວຽກຢູ່ພາກສະໜາມ:

10. ທ່ານຄິດແນວໃດກັບຊຸມຊົນຂອງທ່ານ?
11. ຄວາມຮັບຜິດຊອບ ທີ່ສຳຄັນທີ່ສຸດຂອງທ່ານແມ່ນຫຍັງ?
12. ທ່ານຢູ່ຊຸມຊົນນີ້ບໍ ແລະ ຢູ່ດົນປານໃດ?
13. ການແກ້ໄຂບັນຫາ ທ່ານສະເໜີໃຫ້ເຮັດແນວໃດ ຕາມທີ່ ທ່ານມີປະສົບການ?
14. ພື້ນຖານຖຸຄງລ່າງໃດແດ່ ທີ່ທ່ານມີ ໃນຊຸມຊົນຂອງທ່ານ?
15. ຄວາມຮັບຜິດຊອບຂອງທ່ານ ຜ່ານມາແມ່ນຫຍັງ?
16. ພະຍາດຫຍັງ ທີ່ສົ່ງຜົນກະທົບຕໍ່ຊຸມຊົນຂອງທ່ານ?
17. ໃນເມື່ອເກີດມີອັກຄີໄພ, ຊຸມຊົນຂອງທ່ານມີການຕອບໂຕ້ຄືແນວໃດ ?

1. ທ່ານຈັດການກັບຂີ້ເຫຍື້ອຂອງທ່ານແນວໃດ?
2. ຄູ່ມືການກໍ່ສ້າງ ຫລືຕໍ່ເຕີມອາຄານຂອງທ່ານເປັນແບບ ໃດ?
3. ທ່ານໄປຕັກນ້ຳ ຢູ່ໃສ ສຳລັບ ກ) ນ້ຳດື່ມ, ຂ) ຊັກເຄື່ອງ, ຄ) ນ້ຳອາບ ?
4. ກິດຈະວັດ ປະຈຳວັນ ຂອງທ່ານແມ່ນຫຍັງ?
5. ມີໃຜແດ່ຢູ່ເຮືອນນຳ ? ກ) ບອກອາຍຸ, ຂ) ເພດ, ຄ) ສາຍພົວພັນ
6. ທ່ານອາໃສຢູ່ເຂດນີ້ຮູ້ສຶກແນວໃດ?
7. ບອກໂຄງສ້າງຄອບຄົວຂອງທ່ານ ແລະ ທ່ານສະໜັບສະໜູນ ສະມາຊິກຄອບຄົວແນວໃດ?
8. ວິຖີຊີວິດຂອງທ່ານ ກ່ອນພາຍຸ ເຮີຣີແຄນ ອີວານ ແລະ ຫລັງພາຍຸ ເປັນແນວໃດ?
9. ສິ່ງທີ່ປ່ຽນແປງຕົ້ນຕໍ ໃນຊີວິດປະຈຳວັນຂອງທ່ານ ຫລັງພາຍຸ ໃຕ້ຝຸ່ນຊ້າງສານເກີດຂື້ນ ແມ່ນຫຍັງ?

## 4. ການກຳນົດລະບົບຂອງຂໍ້ມູນ ແລະ ກະກຽມສຳລັບມື້ທີ່ 3 ສະໜັບສະໜູນຂັ້ນຕອນທີ່ຜົນໄດ້ຮັບຢູ່ໃນຂີດຄວາມສາມາດ ອັນໃໝ່:

ໃນເມື່ອຂໍ້ມູນທີ່ລວບລວມໄດ້ ໄດ້ຮັບການເຫັນດີ ແລະ ປຶກສາຫາລື ກັບຊຸມຊົນແລ້ວ, ຈຳເປັນຕ້ອງກຳນົດລະບົບ ຂໍ້ມູນໃສ່ໃນແບບຟອມ ເຄື່ອງຄອມພິວເຕີ. ສະນັ້ນ ຖ້າຫາກຊຸມຊົນບໍ່ ມີໄຟຟ້າ, ຂໍ້ມູນ ຈະຕ້ອງບັນທຶກໃສ່ແຜ່ນເຈ້ຍ. ບໍ່ຄວນ ຖິ້ເປົາ.

ນໍາເອົາຄວາມດີແລະຮອຍຍິ້ມມາສູ່ຄົນທີ່ມີການປະກອບສ່ວນເຂົ້າໃນພາລະໜ້າທີ່ຂອງຂະບວນການກາແດງ-ກາຊີກວົງ ເດືອນແດງສາກົນ, ກາແດງອິນໂດເນເຊຍ




## ມື້ທີ 3

1. ປະຊຸມຮ່ວມກັບ ສະມາຊິກຊຸມຊົນ ເພື່ອກໍານົດກິດຈະກໍາສໍາລັບ ການປ່ຽນແປງຈາກ ຄວາມສ່ຽງ ມາເປັນ ຄວາມສາມາດ ແລະ ປະຕິບັດຂັ້ນຕອນໃຫ້ສໍາເລັດ ພ້ອມກັບ ກິດຈະກໍາ ສະເພາະ ໃນການປ້ອງກັນ, ການຫລຸດຜ່ອນ ແລະ ຫ້າງ ທາກະກຽມ.
2. ການສ້າງລະບົບຂອງຂໍ້ມູນ ແລະ ສົບທົບກັນກ່ອນອອກຈາກ ຊຸມຊົນ

### 1. ປະຊຸມຮ່ວມກັບ ສະມາຊິກຊຸມຊົນ ເພື່ອກໍານົດກິດຈະກໍາ ເພື່ອປ່ຽນຈາກ ຄວາມສ່ຽງ ມາເປັນຄວາມອາດ ສາມາດ:

**ຂໍ້ຄວນຈໍາ:** *ຕ້ອງການແຜນທີ່ເພື່ອຈັດລໍາດັບສໍາລັບກິດຈະກໍາ ເພື່ອໃຫ້ຄວາມສົນໃຈແລະໃຊ້ທຶນ ໂດຍສະເພາະ*

ກໍານົດ ຄວາມສ່ຽງສະເພາະ ຢູ່ໃນສະຖານະການ ສະເພາະ, ມັນຈໍາ ເປັນຕ້ອງໄດ້ຫັນໃຫ້ເປັນກິດຈະກໍາ ທີ່ເປັນຮູບປະທໍາ. ຍົກຕົວຢ່າງ, ຖ້າ ຫາກກຸ່ມໄດ້ກໍານົດວ່າ ຄວາມອ່ອນແອໜຶ່ງ ໃນເມື່ອເກີດແຜ່ນດິນໄຫວ ແມ່ນການກໍ່ສ້າງ ບໍ່ໄດ້ຄຸນນະພາບ, ກິດຈະກໍາຕ່າງໆຄວນ ໄດ້ຮັບ ການ ປະຕິບັດ, ເປັນຕົ້ນ ວິເຄາະເຕັກນິກການກໍ່ສ້າງ ທີ່ໃຊ້ກໍ່ສ້າງ ຢູ່ໃນຊຸມ ຊົນ; ເກັບກໍາຂໍ້ມູນ ກ່ຽວກັບພື້ນທີ່ ທີ່ມີຄວາມສ່ຽງ ສູງຈາກການ ລະ ບາຍນໍ້າ, ການວິເຄາະໂຄງສ້າງ, ກໍານົດພື້ນທີ່ປອດໄພ ແລະ ອັນຕະລາຍ , ກິດຕະກໍາຈະຕ້ອງໄດ້ປະ ຕິບັດ ຂະນະ ແລະຫຼັງເກີດແຜ່ນດິນ ໄຫວ ແລະ ອື່ນໆ

ເພື່ອວິເຄາະ ເງື່ອນໄຂ ຂອງຄວາມອ່ອນແອ, ຈະນໍາໃຊ້ ການວິເຄາະດັ່ງຕໍ່ໄປນີ້ເລີ່ມຈາກການ ກໍານົດ ຄວາມອ່ອນແອໂດຍ ຜ່ານສາເຫດ ຂອງຄວາມອ່ອນແອ ເພື່ອພິຈາລະນາ ກິດຈະກໍາຕ່າງໆ ທີ່ຈະຕ້ອງປະຕິບັດເພື່ອປ່ຽນສິ່ງຈໍາກັດ ໃຫ້ກາຍເປັນຄວາມ ສາມາດ.

### ປ່ຽນຄວາມຕ້ານທານຕໍ່າ ໃຫ້ກາຍເປັນ ຄວາມສາມາດ:

ຈົ່ງຈໍາໄວ້ ຕາຕະລາງນີ້ ຕ້ອງໄດ້ຮັບການປັບປຸງ ຮ່ວມ ຫລື ໂດຍຊຸມຊົນ. ໃນເມື່ອໄພອັນຕະລາຍ ແລະ ຄວາມດ້ອຍໂອກາດ ໄດ້ຮັບການກໍານົດ, ຂັ້ນຕອນສໍາລັບການປະຕິບັດກິດຈະກໍາ ສໍາລັບ ຄວາມຕ້ອງການການປ່ຽນຖ່າຍ ຕ້ອງໄດ້ຮັບການ ພັດທະນາ ຮ່ວມກັບ ສະມາຊິກ ຊຸມຊົນ. ໃນການປະຕິບັດ ເຊັ່ນນັ້ນ, ຊຸມຊົນສືບຕໍ່ເພີ້ມ ລະດັບຄວາເປັນເຈົ້າ ຕົນເອງ ແລະ ມີຄວາມເຂັ້ມແຂງ ສາມາດປະຕິບັດ ກິດຈະກໍາປ່ຽນຖ່າຍ ດ້ວຍຊຸມຊົນຂອງເຂົາເຈົ້າເອງ.

### ຈະເຮັດແນວໃດ ໃຫ້ກາຍເປັນ ກິດຈະກໍາ ທີ່ເປັນຮູບປະທໍາ

ປະຈຸບັນພວກເຮົາກໍາລັງວິເຄາະກົນໄກ ເພື່ອຮັບປະກັນວ່າສາມາດ ນໍາເອົາກິດຈະກໍາມາປະຕິບັດ. ເພື່ອປະຕິບັດເຊັ່ນນັ້ນ, ພວກເຮົາ ຕ້ອງຈໍາໃສ່ໃຈຈຸດຕ່າງໆ ດັ່ງຕໍ່ໄປນີ້:

a. ກິດຈະກໍາ ສາມາດ ປະຕິບັດໄດ້ທັນທີບໍ?
b. ມັນຕ້ອງການຊັບພະຍາກອນບໍ?
c. ພວກເຮົາສາມາດຊອກ ຊັບພະຍາກອນ ທີ່ຈໍາເປັນໄດ້ ດ້ວຍຕົວຂອງເຮົາເອງບໍ, ຖ້າໄດ້, ເຮັດແນວໃດ?
d. ມັນຕ້ອງການ ການສະໜັບສະໜູນດ້ານວິຊາການບໍ, ຖ້າຕ້ອງການ, ຈາກໃສ?

ການແກ້ໄຂບັນຫາ ຕ້ອງການ ເປັນສ່ວນໜຶ່ງ ຂອງທັກສະ/ຫລື ຊັບພະຍາກອນ ຂອງຊຸມຊົນ. ຖ້າຫາກ ການແກ້ໄຂບັນຫາ ຕ້ອງການເງິນ, ການສະໜັບສະໜູນ ດ້ານການເງິນ ຕ້ອງເປັນສ່ວນໜຶ່ງ ຂອງການ ແກ້ໄຂບັນຫາ (ດ້ວຍແນວຄິດທີ່ສ້າງສັນ, ສ່ວນຕ່າງໆ ແລະ ການສະສົມ ແລະ ອື່ນໆ). ຖ້າຕ້ອງການບາງ ທັກສະ ກໍຕ້ອງຊອກໃນຊຸມຊົນເອງ ລວມທັງເພື່ອນ, ຍາດພີ່ນ້ອງ ແລະ ອື່ນໆ. ຊັບພະຍາກອນສຸດທ້າຍ ຕ້ອງມີຄົນຜູ້ທີ່ຢູ່ນອກ ຊຸມຊົນ ທີ່ໄດ້ຮັບຜົນກະທົບ.

**ຕາຕະລາງທີ 7 :** ຕົວຢ່າງຂອງປ່ຽນຄວາມຕ້ານທານຕ່ຳ ໃຫ້ກາຍເປັນ ຄວາມສາມາດ:

| ເຫດການ/ບັນຫາ/ຄວາມສ່ຽງ | ຄວາມສ່ຽງ/ຄວາມອ່ອນແອ | ກິດຈະກຳ ປ່ຽນຄວາມອ່ອນແອ ເປັນຄວາມສາມາດ |
|---|---|---|
| 1. ຂາດທີ່ຢູ່ອາໃສ | - ຫລາຍຄົນຢູ່ໃນເຮືອນຫລັງດຽວ<br>- ບໍ່ມີ ຄວາມເປັນສ່ວນຕົວ<br>- ດ້ອຍທາງສັງຄົມ | ແບບແຜນການສ້າງເຮືອນ |
| 2. ຂາດອຸປະກອນ ການຜະລິດ (ກະສິກຳ) | - ເດັກນ້ອຍຂາດສານອາຫານເດັກນ້ອຍ<br>- ອອກໂຮງຮຽນ<br>- ຂາດເຂົ້າກິນສອງສາມເດືອນ<br>- ຍ້າຍຖິ່ນຖານ | - ສະໜອງເຄື່ອງມືການຜະລິດ<br>- ຝຶກອົບຮົມວິຊາຊີບ |
| 3. ດິນເຊາະເຈື່ອນ (ແມ່ນ້ຳ ແລະ ທະເລ) | - ຜົນລະປູກ ຕົກຕ່ຳ (ເນື່ອງຈາກ ນ້ຳເຄັມ)<br>- ຜະລິດຕະພັນ ສັດນ້ຳ ຕົກຕ່ຳ | - ສົມທົບກັບນ້ຳ ທະເລ ແລະ ແມ່ນ້ຳ<br>- ປູກ ຕົ້ນ ໄມ້ ປ້ອງກັນ ແລະ ຮັກສາ |
| 4. ຂາດການສຶກສາ/ ຝຶກອົບຮົມ ທາງວິຊາຊີບ | - ຄວາມຮູ້ກ່ຽວກັບຄວາມສ່ຽງຕ່ຳ<br>- ການຍ້າຍຖິ່ນຖານ(ຜູ້ຊາຍ)ຈາກນັ້ນ ບໍ່ມີໃຜດູແລ ໃນເວລາມີໄພພິບັດ ເກີດຂຶ້ນ | - ເພີ້ມການປູກຈິດສຳນຶກໃຫ້ສູງຂື້ນ<br>- ດຳເນີນການຝຶກວິຊາຊີບ |
| 5. ລາຍຮັບຕ່ຳ | ຄຸນນະພາບຊີວິດຕ່ຳ | ແຜນສ້າງລາຍຮັບ |
| 6. ຖະໜົນແຄບ | - ອຸປະຕິເຫດທ້ອງຖະໜົນ<br>- ຄວາມຍຸ້ງຍາກ ໃນການຂົນສົ່ງ | - ການປູກຈິດສຳນຶກ<br>- ຖະໜົນໃຫ້ກວ້າງອອກ |
| 7. ບໍ່ມີບ່ອນຫລິ້ນ ແລະ ບ່ອນພັກຜ່ອນ | ຮ່າງກາຍບໍ່ແຂງແຮງ (ສຸຂະພາບບໍ່ດີ) | ສ້າງບ່ອນເດີນຫລີ້ນ |

**ຕາຕະລາງທີ 8 :** ຕົວຢ່າງຕາຕະລາງກ່ຽວກັບ ການຊອກຫາ ການແກ້ໄຂບັນຫາ:

| ກິດຈະກຳ | ສັ້ນ/ຍາວ | ການສະໜັບສະໜູນ ດ້ານການເງິນ (?) | ຊັບພະຍາກອນຢູ່ໃສ (?) | ການສະໜັບສະໜູນ ດ້ານວິຊາການ |
|---|---|---|---|---|
| 1. ແຜນການສ້າງ ເຮືອນ | ໄລຍະຍາວ | ຕ້ອງການ | ຕອນໃນຢູ່ຊຸມຊົນແຮງງານຊຸມຊົນ ທຶນເພື່ອຈັດຊື້ ວັດຖຸກໍ່ສ້າງ | ຕ້ອງການ (ວິຊາ ວະກອນກໍ່ສ້າງ) |
| 2. ສະໜອງ ເຄື່ອງມື ການຜະລິດ | ບໍ່ສັ້ນ,ບໍ່ຍາວ | ຕ້ອງການ | ອຳນາດການປົກຄອງທ້ອງຖິ່ນແລະຊຸມຊົນ | ບໍ່ຕ້ອງການ |
| 3. ປູກຕົ້ນໄມ້ | ໄລຍະຍາວ | ຕ້ອງການ | ທຶນແຮງງານທ້ອງຖິ່ນເມັດພັນ ແລະ ຜູ້ສະໜອງຊຸມຊົນປ້ອງກັນ | ຕ້ອງການ (ວິຊາການ ກະສິກຳ) |
| 4. ເພີ້ມຄວາມຮູ້ | ບໍ່ສັ້ນ,ບໍ່ຍາວ | ຕ້ອງການ | ຊັບພະຍາກອນຄົນສະຖານ ທີ່ ຢູ່ຊຸມຊົນເງິນ/ຜູ້ໃຫ້ທຶນ ອຸປະກອນ | ຕ້ອງການ ລັກສູດວິຊາການ ຈາກໂຮງຮຽນຫລື ອົງການຈັດຕັ້ງ) |
| 5. ສ້າງລາຍຮັບ | ບໍ່ສັ້ນ,ບໍ່ຍາວ | ຕ້ອງການ | ອຳນາດການປົກຄອງ/ທະນາຄານ/ຜູ້ໃຫ້ທຶນ | ຕ້ອງການ (ວິຊາການ) |
| 6. ເພີ້ມຄວາມ ກ້ວາງ ຖະໜົນ | ໄລຍະຍາວ | ຕ້ອງການ | ລັດຖະບານ ແລະ ຊຸມຊົນ | ຕ້ອງການ |
| 7. ສ້າງບ່ອນ ພັກຜ່ອນ | ບໍ່ສັ້ນ,ບໍ່ຍາວ | ຕ້ອງການ | ຊຸມຊົນ, ອຳນາດການປົກ ຄອງ ທ້ອງຖິ່ນ ແລະ ຜູ້ໃຫ້ທຶນ | ຕ້ອງການ |

ກິດຈະກຳ ສຳລັບການປ່ຽນແປງຂ້າງເທິງນັ້ນ ຕ້ອງການໄດ້ຮັບການພິຈາລະນາ ສຳລັບບາດກ້າວຕໍ່ໄປ ທີ່ພວກເຮົາຕ້ອງການພັດທະນາ ກິດຈະກຳທີ່ມີຄວາມເປັນຈິງ ພາຍໃນຊຸມຊົນ. ການວິເຄາະເພື່ອນຮ່ວມງານ (ການວິເຄາະເຄືອຂ່າຍທາງອີງ ການຈັດຕັ້ງ ແລະ ສັງຄົມ) ຈະເປັນຈຸດສຳຄັນ ໃນການເລີ້ມຕົ້ນ.

## 2. ການສ້າງລະບົບ ຂອງຂໍ້ມູນທຸກຢ່າງ ແລະ ການສົມທົບ ຂໍ້ມູນ ກ່ອນອອກຈາກຊຸມຊົນ

ຮອດເວລາສຳລັບຂັ້ນຕອນເບື້ອງຕົ້ນ ຂອງການກຳນົດລະບົບ. ເມື່ອສຳເລັດແລ້ວ, ທີມງານຕ້ອງນຳສະເໜີ ແລະ ວາງແຜນກິດຈະກຳ ຢູ່ຊຸມຊົນ (ຫົວໜ້າ ແລະ ສະມາຊິກ) ເພື່ອກວດຄືນອີກເທື່ອໜຶ່ງ ກ່ອນອອກຈາກຊຸມຊົນ ແລະ ເຮັດວຽກສຸດທ້າຍ. ເມື່ອບົດລາຍງານສຸດທ້າຍ ແລະແຜນກິດຈະກຳສຳເລັດ, ພວກເຮົາຕ້ອງການສົມທົບ ກັບຊຸມຊົນ ອີກເທື່ອໜຶ່ງ ແລະ ຈັດກອງປະຊຸມ ເພື່ອຂັບເຄື່ອນ ຊັບພະຍາກອນ ຮ່ວມກັບເພື່ອນ ຮ່ວມງານ ຫລື ຜູ້ໃຫ້ທຶນ ເພື່ອຊອກຫາການສະໜັບສະໜູນ ຖ້າຕ້ອງການ. ທີມງານກໍຕ້ອງການ ສົມທົບຜົນໄດ້ຮັບກັບສະພາກາແດງແລະ ສຳນັກງານໃຫຍ່ກາແດງ ແລະ ຜູ້ໃຫ້ທຶນທີ່ກ່ຽວຂ້ອງເພື່ອຂໍການສະໜັບສະໜູນ. ຜົນໄດ້ຮັບຈາກ ການປະເມີນຄວນການ ຂອງຊຸມຊົນ ໃນໄລຍະຍາວ. ປັບປຸງໃຫມ່, ການຕິດຕາມ ແລະ ການປະເມີນຄວາມຄືບໜ້າ ແລະການປ່ຽນແປງ ໃນຊຸມຊົນຄວນໄດ້ຮັບການປະຕິບັດບົນພື້ນຖານ

ທີ່ເປັນປົກກະຕິ ເພື່ອສະໜັບສະໜູນ ທາງດ້ານວິຊາການ ແລະ ກຳລັງແຮງຖ້າຈຳເປັນ. ການປ່ຽນແປງຢູ່ຊຸມຊົນຄວນໄດ້ກຳນົດເຂົ້າໃນບົດລາຍງານປະຈຳປີ ກ່ຽວກັບການຫລຸດຜ່ອນຄວາມສ່ຽງ ຈາກໄພພິບັດ ຂອງກາແດງແຫ່ງຊາດ. ສຸດທ້າຍ ແຕ່ບໍ່ນ້ອຍ ແລະມີຄວາມສຳຄັນຫລາຍນັ້ນກໍຄື ການຝຶກອົບຮົມໃຫ້ສະມາຊິກຊຸມຊົນຕະຫຼອດໄລຍະດຳເນີນກິດຈະກຳໃນທຸກໆຂັ້ນຕອນ ເພື່ອໃຫ້ເຂົາເຈົ້າສາມາດເປັນເຈົ້າຕົນເອງ.

### ເອກະສານອ້າງອີງທີ່ຄວນຈຳ :

- ການປະເມີນ VCA ແມ່ນຫຍັງ (IFRC 2007)
- ຈະດຳເນີນການປະເມີນ VCA ແນວໃດ (IFRC 2007)
- ເຄື່ອງມື ການປະເມີນ VCA (IFRC 2007)
- ຂໍ້ແນະນຳ ການຝຶກອົບຮົມ VCA (IFRC 2007)



ອາສາສະໝັກກາແດງຊ່ວຍຊຸມຊົນໃນການໃຊ້ຫີນກໍ່ກັນຕະລິ່ງເຈື່ອນ - ກາແດງຕີມໍຕາເວັນອອກ

## ເອກະສານຊ້ອນທ້າຍ 1:

## ແຜນວາດອະທິບາຍ ຂັ້ນຕອນການ ປະເມີນ VCA

ສິ່ງພິມ ແລະ ການໂຄສະນາ ການປະເມີນ VCA ສາກົນ

ຍຸດທະສາດ ປະຈຳພາກພື້ນ ເພື່ອເສື່ອມສານ VCA ເຂົ້າກັບແຜນງານທີ່ມີແລ້ວ

ກອງປະຊຸມປຶກສາຫາລື ເພື່ອເພີ້ມຄວາມຮັບຮູ້

ການປະເມີນ VCA ພາກພື້ນ

ແຜນປະຕິບັດການປະເມີນ VCA ພາກພື້ນ

ຈັດຝຶກອົບຮົມ VCA ລະດັບຊາດ

VCA ຊຸມຊົນ

**ຈຸດໃຈກາງຊຸມຊົນ**

ຝຶກອົບຮົມ ຊຸມຊົນ

ສ້າງແຜນທີ່ຊຸມຊົນ

ເກັບກຳ, ລວບລວມ ແລະ ວິເຄາະ
ຂໍ້ມູນຂອງຊຸມຊົນ

ວິເຄາະສະຖານະການ ກັບແຜນຊຸມຊົນ,
ການທົດລອງ ແລະ ອື່ນໆ

ສ້າງລະບົບຂໍ້ມູນ (ອີງການຈັດຕັ້ງ ແລະ ຊຸມຊົນ)

ການຕັດສິນໃຈ - ການເສື່ອມສານ

# ເອກະສານຊ້ອນທ້າຍ 2 :

## ຕາຕະລາງ ເຮັດວຽກປະຈຳວັນ ຢູ່ພາກສະໜາມ

### ຕົວຢ່າງຂອງຕາຕະລາງເຮັດວຽກປະຈຳວັນ

| ເວລາ | ຕາຕະລາງປະຈຳວັນ |
|---|---|
| 30 ນາທີ | ການແນະນຳຕໍ່ຊຸມຊົນ :<br>- ອະທິບາຍຈຸດປະສົງຂອງແຕ່ລະວັນ<br>- ແນະນຳທີມງານ<br>- ສັງລວມວ່າມີຫຍັງແດ່ຈະໄດ້ປະຕິບັດໃນແຕ່ລະວັນ<br>- ແບ່ງກຸ່ມອີງຕາມທີ່ຊຸມຊົນໄດ້ແບ່ງໃຫ້ |
| 2 ຊມ 30ນາທີ | - ຕິດຕາມກວດເບິ່ງ 2 ກຸ່ມ (ຕົວຢ່າງ: ສະຫະພັນແມ່ຍິງ ແລະຊາວນາ) ສຳພາດເອົາຂໍ້ຄວາມສຳຄັນ (ຕົວຢ່າງ: ອາຈານສອນ, ຜູ້ສູງອາຍຸພາຍໃນບ້ານ, ທ່ານໝໍ)<br>- ຍ່າງສຳຫຼວດ ແລະ ສັງເກດໂດຍກົງ |
| 1 ຊມ 30 ນາທີ | - ຝຶກເຮັດແຜນທີ່ຮ່ວມກັບຊຸມຊົນ (ປະມານ 10 ຄົນ)<br>+ ຂໍ້ມູນທາງປະຫັວດສາດ<br>+ ແຜດວາດລະດູການ |
| 1 ຊມ | ອາຫານທ່ຽງ: ປຶກສາຫາລືວິທີການປະຕິບັດ, ສັງເກດໂດຍກົງ(ບັນທຶກ: ທ່ານອາຈະຈັດຫາອາຫານທ່ຽງ ຫຼື ອາຫານຫວ່າງ ສຳຫຼັບຜູ່ມາຮ່ວມ ແລະ ອາສາສະໝັກ) |
| 2 ຊມ | ປະເມີນຄວາມອ່ອນແອບ້ານເຮືອນ ທີ່ພັກພາອາໃສພາຍໃນບ້ານ<br>ປະເມີນອົງການຈັດຕັ້ງ ແລະພື້ນຖານໂຄງລ່າງຂອງເຂົາເຈົ້າ |
| 1 ຊມ | ສະຫຼຸບປະເມີນຜົນຂອງແຕ່ລະວັນ ແລະ ກະກຽມໃນວັນຕໍ່ໄປ |

# ເອກະສານຊ້ອນທ້າຍ 3 :

## ສ່ວນປະກອບທີ່ສຳຄັນຂອງການປະເມີນຄວາມອ່ອນແອ ແລະ ຄວາມສາມາດ

**ຂໍ້ຄວນຈຳທີ່ສຳຄັນຂອງຜູ້ທີ່ເຮັດ VCA ຕ້ອງການເວລາ ແລະ ບຸກຄະລາກອນ. ຕັ້ງໃຈຕິດຕາມຈຸດຕ່າງໆລຸ່ມນີ້:**

| | |
|---|---|
| ຈຸດປະສົງ | ອະທິບາຍຈຸດປະສົງໃຫ້ກະຈ່າງແຈ້ງ , ສຳລັບການເຮັດ VCA ຄວນຈະກຳນົດ ແລະແຈ້ງການ |
| ທີ່ຕັ້ງ | ຈຸດເກີດໄພພິບັດ ຫຼື ຊຸມຊົນທີ່ມີຄວາມສ່ຽງ ຫຼື ຄົນໃນຊຸມຊົນຄວນຈະຄັດເລືອກ ຜູ້ຈະປະຕິບັດການປະເມີນຄວາມອ່ອນແອ ແລະ ຄວາມສາມາດ. |
| ປະເມີນທີມງານ | ລວມທັງຜູ້ຝຶກສອນ ແລະເຄືອຄ່າຍຊຸມຊົນ, ກາແດງ/ກາຊີກວົງເດືອນແດງ. ຫຼັກການໃນການປະຕິບັດຂອງຄູຝຶກແມ່ນເປັນຜູ້ສະໜັບໜູນວິທີການປະເມີນ. ເຄືອຄ່າຍຊຸມຊົນເປັນຜູ້ປະຕິບັດຫຼັກ ຜູ້ຊຶ່ງອຳນວຍຄວາມສະດວກໃນການປຶກສາຫາລືບັນຫາຕ່າງໆ. |
| ນັກສຳມະນາກອນ | ສ່ວນໃຫຍ່ແມ່ນມາຈາກພື້ນຖານຮາກຫຍ້າ, ຕົວແທນຈາກຊົນເຜົ່າ ແລະ ສັງຄົມທີ່ແຕກຕ່າງກັນ (ອາຍຸ, ສາດສະໜາ, ອາຊີບ, ເພດ, ຜູ້ດ້ອຍໂອກາດ ແລະ ອື່ນໆ...) ຜູ້ແທນຈາກອົງການຈັດຕັ້ງສາກົນ ແລະ ພະນັກງານພາກລັດທ້ອງຖິ່ນ. |
| ເຄື່ອງມື | ການປະເມີນຄວາມສ່ຽງແບບມີສ່ວນຮ່ວມ (PRA) ດ້ວຍເຄື່ອງມື, ຕົວຢ່າງ ການສັງເກດໂດຍກົງ, ແຜນທີ່ຄວາມສ່ຽງ, ເດີນສຳຫຼວດ, ປະຕິທິນລະດູການ, ປະຫວັດຄວາມເປັນມາ, ປະຫວັດການປ້ອງກັນ(ຮັບມື) ແລະ ການມີກວາດພາບ, ເສັ້ນສະແດງ, ຕົ້ນໄມ້ບັນຫາ, ເຄື່ອງມືທັງໝົດແມ່ນໄຊ້ຫຼາຍໃນການເກັບກຳຂໍ້ມູນ ແລະ ການວິເຄາະ. ເລືອກເຄື່ອງມືທີ່ເໝາະສົມ |
| ວິທີການປະຕິບັດ | **ແຜນການ** : ກະກຽມແຜນປະຕິບັດ, ທີມປະເມີນ, ພະລາທິການ, ອຳນວຍຄວາມສະດວກທີ່ເໝາະສົມ ແລະ ການປະຕິບັດ ---><br>**ເປົ້າໝາຍ** ລົງສູ້ພະນັກງານພາກລັດຢູ່ທ້ອງຖິ່ນຂະຫຍາຍແບບມີສ່ວນຮ່ວມຂອງຄົນພື້ນຖານຮາກຫຍ້າແລະ ຕິດຕາມຜົນຂອງການເຮັດ VCA ---><br>**ເກັບກຳຂໍ້ມູນ** ---> ຂໍ້ມູນດິບ---> ຂໍ້ມູນຜ່ານທີ່ລະດັບຮາກຫຍ້າໂດຍການໃຊ້ເຄື່ອງມື<br>**ການວິເຄາະ** ໄພອັນຕະລາຍ, ຄວາມອ່ອນແອ, ຄວາມສາມາດ ແລະການບົ່ງມະຕິໄພອັນຕະລາຍ---><br>**ພິສູດ ການເອົາ**ຂໍ້ມູນກັບຊຸມຊົນ---><br>**ແຜນການສຳລັບການປ່ຽ**ນ ຂອງຄວາມອ່ອນແອໄປຫາ ຄວາມສາມາດ---><br>**ການລາຍງານ** ---> ຕິດຕາມ (ຈຳນວນລວມຂອງແຜນພັດນາຂອງລັດຖະບານໃນຊຸມຊົນ) |
| ຜົນໄດ້ຮັບ | ▪ ການເກັບກຳຂໍ້ມູນເພື່ອປະເມີນຂັ້ນຕົ້ນນັ້ນສາມາດກາຍເປັນເປັນຈຸດເຫດສຸກເສີນ ແລະ ການຫ້າງຫາກະກຽມໄພພິບັດຈຳເປັນຕ້ອງປະເມີນຕາມໄພພິບັດ<br>▪ ຊຸມຊົນເຂົ້າໃຈກ່ຽວກັບສະພາບພື້ນທີ່ຂອງເຂົາເຈົ້າວ່າໄພອັນຕະລາຍຫຍັງ ແລະ ຄວາມສ່ຽງອັນໃດ<br>▪ ຄວາມເປັນຈິງຂອງຄວາມສາມາດໃນການຮັບມື ກັບໄພອັນຕະລາຍ ແລະຄວາມສ່ຽງ<br>▪ ຂໍ້ຕົກລົງຂອງ ຊຸມຊົນ, ອົງການຈັດຕັ້ງທ້ອງຖິ່ນຂອງການຄວາມຕ້ອງການປະຕິບັດການປ້ອງກັນ ຫຼື ສະຫຼຸບຜົນຂອງໄພພິບັດ<br>▪ ຄວາມສຳກ່ຽວຂ້ອງ ແລະສຳພັນຂອງໂຄງການໃນການຫຼຸດຜ່ອນຄວາມສ່ຽງ, ການຜ່ອນຄາຍ, ການປ້ອງກັນ, ການຫ້າງຫາກະກຽມ ແມ່ນການປະຕິບັດ ແລະ ການປະເມີນຕີລາຄາ |

# ເອກະສານຊ້ອນທ້າຍ 2:

## ຕາຕະລາງ ເຮັດວຽກປະຈໍາວັນ ຢູ່ພາກສະໜາມ

| ຕາຕະລາງປະຈໍາວັນ | |
|---|---|
| ກິດຈະກໍາ | ຄວາມຄາດຫວັງທີ່ຈະໄດ້ຮັບ |
| ມື້ທີ 1 | |
| 1. | |
| 2. | |
| 3. | |
| 4. | |
| ມື້ທີ 2 | |
| 1. | |
| 2. | |
| 3 | |
| 4 | |
| ມື້ທີ 3 | |
| 1. | |
| 2. | |
| 3. | |
| 4. | |

# ຫຼັກການພື້ນການຂອງຂະບວນການກາແດງ ແລະ ກາຊິກວົງເດືອນແດງສາກົນ

### *ຄວາມເປັນມະນຸດສະທຳ*

ຂະບວນການກາແດງ ແລະ ຊິກວົງເດືອນແດງສາກົນເກີດຂື້ນ ໂດຍມີຈຸດປະສົງໃນການໃຫ້ການຊ່ວຍເຫຼືອຜູ້ອື່ນ ທີ່ກຳລັງເດືອດຮ້ອນ ໂດຍບໍ່ຈຳ ແນກຕໍ່ຜູ້ບາດເຈັບຈາກສົງຄາມ, ພະຍາຍາມປ້ອງກັນ ແລະລົບລ້າງຄວາມທຸກທໍລະມານຂອງມະນຸດ ໃນເວລາທີ່ພົບເຫັນຕາມຂີດຄວາມສາ ມາດພາຍໃນ ແລະສາກົນຂອງຕົນເອງ. ຈຸດປະສົງຂອງຂະບວນການນີ້ແມ່ນເພື່ອຄຸ້ມຄອງຊີວິດ ແລະ ສຸຂະພາບ ແລະເພື່ອຮັບປະກັນການ ເຄົາລົບ ຕໍ່ມະນຸດດ້ວຍກັນ. ມັນສົ່ງເສີມຄາວມເຂົ້າໃຈ, ມິອຕະພາບ, ການຮ່ວມມື ແລະສັນ ຕິພາບທີ່ຍາວນານເຊິ່ງກັນແລະກັນ.

### *ຄວາມທ່ຽງທຳ-ບໍ່ເລືອກຊັ້ນວັນນະ*

ຂະບວນການນີ້ບໍ່ໄດ້ຈຳແນກສັນຊາດ, ເຊື້ອຊາດ, ຄວາມເຊືອຖືທາງສາດສະໜາ, ຊົນຊັ້ນ ຫຼື ຄວາມຄິດເຫັນທາງດ້ານການເມືອງ. ຂະບວນ ການນີ້ພະຍາຍາມທີ່ຈະບັນເທົາຄວາມທຸກທໍລະມານຂອງບຸກຄົນ ໂດຍອີງໃສ່ຄວາມຕ້ອງການຂອງ ຂົາເຈົ້າພຽງຢ່າງດຽວເທົ່ານັ້ນ ແລະໃຫ້ບຸ ລິມະສິດ ແກ່ເຫດການທີ່ເປັນອັນຕະລາຍກ່ອນ.

### *ຄວາມເປັນກາງ*

ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ທຸກຝ່າຍ, ຂະບວນການນີ້ຈະບໍ່ເຂົ້າຂ້າງໃຜໃນເວລາມີການຕໍ່ສູ້ ຫຼື ກ່ຽວຂ້ອງກັບການຜິດຖຽງທາງ ດ້ານ ການ ເມືອງ, ເຊື້ອຊາດ, ສາດສະໜາ ຫຼື ລັດທິໃດໜຶ່ງ

### *ຄວາມເປັນເອກະລາດ*

ຂະບວນການນີ້ເປັນຂະບວນການເອກະລາດ. ອົງການກາແດງແຫ່ງຊາດ, ທີ່ຊ່ວຍໃນການບໍລິການທາງດ້ານມະນຸດສະທຳຂອງລັດຖະບານ ແລະ ຢູ່ພາຍໄຕ້ກົດໝາຍຂອງປະເທດທີ່ກ່ຽວຂ້ອງ, ຈະຕ້ອງຮັກສາຄວາມເປັນເຈົ້າຕົນເອງ ໄວ້ເພື່ອທີ່ຈະສາມາດປະຕິບັດຕາມຫຼັກການຂອງຂະບວນ ການດັ່ງກ່າວໄດ້ທຸກເວລາ

### *ຄວາມສະໝັກໃຈ*

ຂະບວນການນີ້ແມ່ນ ຂະບວນການບັນເທົາທຸກທີ່ສະໝັກໃຈ ໂດຍບໍ່ມີແນວຄິດຫາຜົນຕອບແທນໃດໆທັງໝົດ

### *ຄວາມເປັນເອກະພາບ*

ຢູ່ໃນປະເທດໜຶ່ງຈະມີອົງການກາແດງ ແລະຊິກວົງເດືອນແດງດຽວເທົ່ານັ້ນ. ໂດຍຈະຕ້ອງເປັນອົງການຊ່ວຍເຫຼືອສຳຫຼັບໝົດທຸກຝ່າຍ ແລະຈະ ຕ້ອງດຳເນີນວຽກງານດ້ານມະນຸດສະທຳໃຫ້ທົ່ວເຖິງໃນຂອບເຂດດິນແດນຂອງຕົນ.

### *ຄວາມເປັນສາກົນ*

ຂະບວນການກາແດງ ແລະຊິກວົງເດືອນແດງສາກົນ, ເຊິ່ງຢູ່ໃນນັ້ນ ອົງການກາແດງ ຂອງທຸກໆປະເທດມີສິດເທົ່າທຽມກັນ ແລະມີໜ້າທີ່ຮັບຜິດ ຊອບຮ່ວມກັນຢ່າງເທົ່າທຽມໃນການຊ່ວຍເຫຼືອເຊິ່ງກັນແລະກັນ,ມີຢູ່ທົ່ວທຸກບ່ອນໃນໂລກ

ນ້ອມພຽງກັນເພື່ອ
ມະນຸດສະທຳ

ສະຫະພັນກາແດງແລະກາຊີກວົງເດືອນແດງສາກົນສົ່ງເສີມກິດຈະກຳການຊ່ວຍ ເຫຼືອດ້ານມະນຸດສະທຳຂອງສະມາຄົມແຫ່ງຊາດໃນບັນດາປະຊາຊົນຜູ້ທີ່ມີຄວາມສ່ຽງ .

ດ້ວຍການປະສານງານ ຊ່ວຍເຫຼືອບັນເທົາທຸກຈາກສາກົນແລະດ້ວຍການສະໜັບ ສະໜູນ, ການຊ່ວຍເຫຼືອພັດທະນາ, ຂະບວນ ການນີ້ຢາກຈະປ້ອງກັນແລະຫຼຸດຜ່ອນຄວາມທໍລະມານຂອງມະນຸດ.

ສະຫະພັນສາກົນ, ສະມາຄົມແຫ່ງຊາດ ແລະ ຄະນະກຳມະການສາກົນ ຂອງສະພາກາແດງ ພ້ອມກັນທີ່ຈະເຂົ້າຮ່ວມ ຂະບວນການເຄື່ອນໄຫວກາແດງແລະກາຊີກວົງເດືອນແດງສາກົນ



Building safer and more resilient communities

in Southeast Asia